# ນິທານ

## ນາງຕັນໄຕ

## ໔

## ປີສາຈະປະກອນ

ຂອງ

ກົມວັນນະຄະດີ

ພິມເທື່ອທີໜຶ່ງ ຈຳນວນ ໒.໐໐໐ ສະບັບ

ວຽງຈັນ, ວັນທີ ໑ ທັນວາ ພ.ສ. ໒໕໐໗

# ສາຣະບານເຣື່ອງ


ດຳເນີນເຣື່ອງ .......................... ໜ້າ ໑

ນິທານທີ ໑ ເຣື່ອງ ເທວະທັດຕະສຸດທະຊາດ ........ " ໓

ນິທານທີ ໒ " ຍັນຍະພານ ................ " ໗

ນິທານທີ ໓ " ພຍາອຸດທະຣາຊອະ ........... " ໑໒

ນິທານທີ ໔ " ຕິສຸທະຣະ ................ " ໒໔

ນິທານທີ ໕ " ຊ້າເຖົ້າເມັ່ງຕີຕາຍ .......... " ໒໗

ນິທານທີ ໖ " ພຍາສຸນທະຣາດ ............. " ໒໘

ນິທານທີ ໗ " ມຸຊະພານ ................. " ໓໑

ນິທານທີ ໘ " ພຣະຣາມະຣາດ .............. " ໓໔

ນິທານທີ ໙ " ໝາຈິກຈອກຊວນເສືອໄປກິນຄົນ ... " ໓໖

ນິທານທີ ໑໐ " ກະຕ່າຍຕົວະລ່າຍຣາຊສີຕາຍ .... " ໓໗

ນິທານທີ ໑໑ " ການະກະປາລະ ............. " ໔໐

ນິທານທີ ໑໒ " ນາງແພສຍາ ............... " ໔໓

ນິທານ

ນາງຕັນໄຕ

໔

<u>ປີສາຈະປະກອນ (ຜີເລືອກນາຍ)</u>

ໃນຄືນຕໍ່ມາອີກ ນາງຕັນໄຕມະຫາເທວີ ກໍເລົ່ານິຍາຍ ເຣື່ອງຜີເລືອກນາຍ ຖວາຍພຍາວິມລະຈັກກະພັດຕິຣາດແລນ້ອງສາວຂອງຕົນຟັງດັ່ງຕໍ່ໄປນີ້ະ

ໃນຄັ້ງກຣິດຍຸກພວກເທພດາແລະໄອສວນທັງຫລາຍ ເຂົາກໍຊວນກັນມາບົບຄັ້ນປັ່ນສມຸດໄດ້ນ້ຳອະມະຕະອອກມາ ພຣະນາຣາຍກໍແ[illegible]ນ້ຳອະມະຕະຣິດໃຫ້ແກ່ເທພດາທັງຫລາຍ ສ່ວນຝູງໄອສວນທັງຫລາຍທີ່ເຂົາບໍ່ໄດ້ ເຂົາກໍຄຽດໃຫ້ແກ່ເທພດາເປັນອັນມາກ ເຂົາຈຶ່ງເຕົ້າໝູ່ລີພົນ ກໍາລັງພ້ອມກັນເຂົ້າໄປຣົບເທພດາທັງຫລາຍ ເທພດາມີພຍາອິນທາເປັນເຈົ້າໝູ່ ເຂົາຕັ້ງຢູ່ດາວິບ. ເມື່ອເທພດາແລະໄອສວນຣົບຕໍ່ສູ້ສົງຄາມເລວກັນ ສຽງນີ່ນັນກຶກກາດ ຕົ້ນອາກາດກາງຫາວ ຊໍ່ຫຸ່ງຊາວທົ່ວອາກາດອະນັນເນກ ພຽງຟ້າເນກບົດບັ້ງ ຫລຽວຫລັງເລວເລີຍລວດແພ້ຝູງໝູ່ໄອສວນ ຝູງໄອສວນເຂົາກໍຈົບຕາຍຕາຍອະນັນເນກມາກນັກນັບບໍ່ໄດ້.

ຜີປີສາດ ຍັກຂະ ກຸມພັນ ຄັນທັບພະ ເຜດສ້າຍ ຟ້າບົດໜອງ ຜີກປອງກິນເນື້ອ ຜີຢູ່ເຮື້ອພູດອຍ ຜີກ່ອງກ່ອຍຊະມ່ອຍດົງ ຜີໂພງ ຜີປ່າ ຜີຄວ່າບ້ານທັກທໍ ເຂົາກໍມາຊຸມນຸມກັນມາກນັກ. ເມື່ອຈັກໄປກິນຊາກໄອສວນຝູງຕາຍນັ້ນ ເຂົາຈຶ່ງຈາກັນວ່າ ບັດນີ້ເຮົາມີລາບແລະອາຫານມາກ

ຈຶ່ງແຕ່ງເຂົ້າຖົງໃຫ້ແກ່ຂ້ອຍເຖີ້ນ   ເມັຽຈຶ່ງຮີບແຕ່ງແປງເຂົ້າໜົມຖົ່ວອີ່ວ ພິດສານໃສ່ໃນ ແຕ່ງອັນໃດນັ້ນກໍໃສ່ພິດສານຊຸ່ອັນແລ້ວຈຶ່ງເອົາໃສ່ໃນຖົງ ໃຫ້ແກ່ຜົວມັນໄປກິນ. ສ່ວນເທວະທັດຕະອັນເຂົ້າໄປໃນພົງໄພປ່າໃຫຍ່-ນັ້ນ ມັນກໍບໍ່ທັນກິນເຂົ້າໜົມອັນນັ້ນ   ເມື່ອໂຈນທັງຫຼາຍເຫັນເທວະທັດຕະ ເຂົ້າໄປໃນປ່າໃຫຍ່ທີ່ນັ້ນ   ເຂົາກໍແລ່ນມາວ່າຈັກກຸມເອົາເທວະທັດຕະ ສ່ວນເທວະທັດຕະມັນກໍແລ່ນໜີ ຖິ້ມແຕ່ຖົງເຂົ້າໜົມໄວ້ ໂຈນທັງຫຼາຍເຂົາ ກໍໄດ້ຖົງເຂົ້າໜົມອັນນັ້ນ ເຂົາກໍເລີຍປັນກັນກິນ ຄັນວ່າເຂົາກິນເຂົ້າໜົມ ນັ້ນໝົດແລ້ວເຂົາກໍຕາຍໄປເສັຽສິ້ນ ເທວະທັດຕະຈຶ່ງຄຶນມາວ່າທີນີ້ບຸນກູມີ ກູຈຶ່ງແພ້ໂຈນໝູ່ນີ້ ມັນກໍປາດພົ້ນໂຈນທັງຫຼາຍຝູງນັ້ນແລ້ວ ມັນກໍເອົາຫອກ ດາບແຫ່ງໂຈນເມືອຖວາຍແກ່ພຍາເຈົ້າເມືອງນັ້ນ.

ພຍາກໍຄຶດວ່າ ກູໃຫ້ຄົນທັງຫຼາຍໄປເອົາໂຈນຝູງນີ້ບໍ່ໄດ້ ບັດນີ້ເທວະທັດຕະຜູ້ດຽວຫາກເລາະໂຈນຝູງນີ້ໄດ້ ຂອບໃຈນຳຊາຍຜູ້ກ້າຫານແຄ້ວ ຄັງນີ້ ພຍາກໍໃຫ້ຮາງວັນແກ່ມັນມີເຂົ້າຂອງສິນບັດເປັນອັນມາກ.

ຕໍ່ນັ້ນໄປມີຣາຊສີຕົວ ໑ ຢູ່ໃນປ່າເຂດເມືອງຄັງຄາບຸຣີນັ້ນ ຣາຊສີຕົວນັ້ນມັນໄລ່ກິນຄົນ ພຍາກໍຈາກັບເທວະທັດຕະວ່າ ດູລາທ່ານໃນເມືອງເຮົານີ້ບໍ່ມີຜູ້ໃດອາດຈະຂ້າຣາຊສີຕົວນີ້ໄດ້ ທີ່ມີແຕ່ທ່ານຜູ້ດຽວ ທ່ານຈຶ່ງໄປຂ້າຣາຊສີຕົວນັ້ນເຖີ້ນ ເທວະທັດຕະບໍ່ອາດຈະຖຽງພຍາໄດ້ມັນຈຶ່ງຈັບເອົາດາບເຂົ້າໄປປ່າ ຣາຊສີເຫັນເທວະທັດຕະ ມັນກໍແລ່ນມາບໍ່ຊ້າທະຍານໃສ່ ເທວະທັດຕະກໍຢ້ານແລ້ວແລ່ນໜີຂຶ້ນຕົ້ນໄມ້ ຣາຊສີແລ່ນເຂົ້າມາອ້າປາກແຫງນຄໍຂຶ້ນເມືອບົນສັ່ນຂົນສູ່ຕົ້ນໄມ້ອັນນັ້ນດັ່ງທີທາດໆ ເທວະທັດ

ຕະກົສະດຸ້ງຕົກໃຈຈົນຕີນມືສັ່ນ ດາບກໍຫຼຸດລົງຈາກມືຕົກເຂົ້າປາກອາຊຸສີບໍ່ຂ້ອງ ຊອດລົງທ້ອງອາຊຸສີຕາຍໄປ ເທວະທັດຕະຈຶ່ງຄະນຶງໃຈວ່າບຸນມີ ອາຊຸສີຕາຍບໍ່ທັນໄດ້ຂ້າ ແລ້ວມັນກໍລົງຈາກຕົ້ນໄມ້ມາຖອດເອົາແຂ້ວ, ຕັດເອົາຫູ, ຫາງແລະປາດເອົາຊີ້ນເນື້ອຖວາຍແກ່ພຍາຄັງຄາບຸຣີ ພຍາກໍມີຄວາມຍິນດີຍິ່ງ ຈຶ່ງຕັ້ງໄວ້ໃນທີ່ອັນມີຍົດຖາບັນດາສັກ.

ຕໍ່ແຕ່ນັ້ນໄປ ຍັງມີພຍາສະຫະອາເຊັນທະທິປະຕີເປັນໃຫຍ່ ຫົວເມືອງທັງຫຼາຍຍ່ອມມາຖວາຍພຍາຕົນນັ້ນ ໃນຄັ້ງ ໑ ພຍາຕົນນັ້ນ ກໍໃຊ້ມາເອົາສ່ວຍໄຮແຕ່ງພຍາຄັງຄາບຸຣີ ແຕ່ພຍາຄັງຄາບໍ່ຍອມໃຫ້. ພຍາສະຫະອາເຊັນທະທິປະຕີກໍຄຽດ ຈຶ່ງຈັດເອົາລີພົນມາສູ່ເມືອງຄັງຄາບຸຣີ ເພື່ອຈັກຮົບເອົາດ້ວຍກຳລັງອັນໂຫດຮ້າຍ ພຍາຄັງຄາບຸຣີກໍຮ້ອນໃຈ ຈຶ່ງຈາກັບເທວະທັດຕະວ່າມະຫາມຸນຕີ ດູລາເຈົ້າມະຫາມຸນຕີ ຜູ້ຈັກຮົບພຍາສະຫະອາເຊັນທະໃຫ້ແພ້ນັ້ນ ໃນເມືອງເຮົານີ້ບໍ່ມີໃຜ ທໍ່ເວັ້ນໄວ້ແຕ່ເຈົ້າຜູ້ດຽວນີ້ຈັກສາມາດປາບແພ້ຂ້າເສິກໄດ້ ໃຫ້ເຈົ້າເອົາລີພົນເຮົາທັງມວນອອກໄປຮົບພຍາຕົນນັ້ນເຖີ້ນ. ເທວະທັດຕະມະຫາມຸນຕີໄດ້ຍິນຄຳພຍາກ່າວແກ່ຕົນດັ່ງນັ້ນຈຶ່ງຄະນຶງວ່າ "ແຕ່ກ່ອນກູແພ້ທ່ານກໍດ້ວຍບຸນກູ ຄັນວ່າບຸນກູມີແທ້ຫາກຈັກແພ້ພຍາຕົນນັ້ນ" ມັນຄະນຶງສັນນີ້ແລ້ວ ມັນກໍຮັບເອົາຄຳພຍາແລ້ວຈຶ່ງເອົາລີພົນຊ້າງ, ມ້າທັງຫຼາຍອອກຈາກກອງໆໄປຕັ້ງທັບຢູ່ທີ່ນຶ່ງ ແລ້ວກໍແຕ່ງໃຫ້ຄົນທັງຫຼາຍຮັກສາເຝົ້າແຫນ ສ່ວນຕົວມັນກໍມີຄວາມຢ້ານກົວ ກາງຄືນນອນບໍ່ຫຼັບ ລຸກນັ່ງຢູ່ຮ່ຳເພິງວ່າ " ເມື່ອໃດພຍາຕົນນີ້ຫຼອນເຂົ້າມາຈັບກູແລ້ວ ກູຈັກໜີໄປຫົນໃດໃນທ່ຽງຄືນນີ້! " ຄະນຶງໃນໃຈ

ດັ່ງນີ້ແລ້ວກໍ່ນັ່ງຢູ່. ພຍາສະຫະອາເຊັນທະເຫັນໝູ່ຊຸມເຂົານ້ອຍດູ່ນດຸ ແຄອນ ເຫດວ່າຕົນເຄີຍແພ້ທ່ານມາແຕ່ກ່ອນແລ້ວ ກໍ່ບໍ່ລະວັງ ພໍຍາມທ່ຽງຄືນນັ້ນພຍາກໍຈາກໝູ່ເຂົ້າມາລຽບດູຜູ້ຄົນອັນມາຢູ່ທັບ ແຫ່ງເທວະທັດຕະນັ້ນ ດ້ວຍໃສ່ໃຈວ່າ "ອັນຮຸ່ງເຊົ້ານີ້ກູຈັກມາຈັບເອົາບໍ່ໃຫ້ຫຼໍສັກຄົນ ກູຄຶດເຮັດໃຫ້ເຂົາຍານໃດ ເຂົາກໍບໍ່ຮູ້ແຕ່ກູເຂົ້າມານີ້ ທາງຜູ້ຈັກຮູ້ເຫັນກໍບໍ່ມີສັກຄົນ" ແຕ່ນັ້ນເທວະທັດຕະມູນຕີນອນບໍ່ຫຼັບ ເຫດວ່າຢ້ານຫຼາຍ ມັນຈຶ່ງເຫັນພຍາເຂົ້າມາໃກ້ທີ່ຕົນຢູ່ນັ້ນ ມັນລອດຜູດລູກແລ່ນໜີໄປພົບເອົາຕົວພຍາ ພຍາຈຶ່ງຖາມວ່າ ມຶງຊື່ລີ? ມັນບອກວ່າກູນີ້ຊື່ມະຫາມູນຕີ ມັນເລົ່າຖາມພຍາວ່າ ມຶງຊື່ລີ? ພຍາກ່າວວ່າກູຊື່ ພຍາມະຫະອາເຊັນທະທິປະຕີ ມັນຄະນຶງໃນໃຈວ່າ ກູຈັກພ່າຍໜີກໍບໍ່ພົ້ນ ມັນລອດກອດກູມເອົາພຍາຮ້ອງແຂກຂຶ້ນ ຄົນຝູງນັ້ນຈຶ່ງມາຊ່ອຍກູມມັດເອົາຕົວພຍາໄດ້ໄວ້ ຮຸ່ງເຊົ້າມາມັນກໍໃຫ້ໄປບອກຂ່າວແກ່ເສນາອາມາດລີພົນພຍາສະຫະອາເຊັນທະນັ້ນ–ວ່າ ພຍາແຫ່ງສູກູຈັບໄວ້ໄດ້ແລ້ວ ເສນາອາມາດທັງຫຼາຍບໍ່ເຫັນພຍາເຈົ້າແຫ່ງເຂົາ ເຂົາກໍແຕ່ງກັນໄປຄ່ອງທາງດູທາງໃດກໍບໍ່ພໍ້ ໄດ້ຍິນແຕ່ຄຳວ່າ "ຕູໄດ້ພຍາສູແລ້ວ" ວ່າດັ່ງນັ້ນ ກໍສະທ້ານຢ້ານກົວວ່າເຂົາມີຄົນດີລອບລັກມາຈັບເອົາພຍາເຂົາໄປໄດ້ ຕ່າງຄົນກໍເອົາເຄື່ອງຂອງລັກໜີໄປໝົດ ເທວະທັດຕະນະມະຫາມູນຕີໃຫ້ບ່າວມັນໄປຂັບໄລ່ ເອົາດ້ວຍກຳລັງສາໂຫດຮ້າຍ ຈັບໄດ້ຜູກມັດຈຳຈ່ອງມາເປັນຂ້າສະເລີຍເສິກ ແລະຜູກມັດເອົາຝູງຊ້າງ, ມ້າ, ເຄື່ອງຂອງຫອກດາບ ໃຫ້ຄົນຫາບຫາມມາເປັນອັນມາກ ເທວະທັດຕະມະຫາມູນຕີ ຈຶ່ງນຳເອົາເຄື່ອງກັບທັງຕົນພຍາສະ

ຫະຣາເຊັນທະນັ້ນມາຖວາຍແກ່ພຍາຄັງຄາບຸຣີຜູ້ເປັນເຈົ້າແຫ່ງຕົນ. ພຍາຄັງຄາບຸຣີກໍຍິນດີເປັນອັນມາກ ຈຶ່ງຖາມເທວະທັດຕະມຸນຕີວ່າ ດູລານມະຫາມຸນຕີທ່ານມາໄດ້ພຍາຜູ້ມີກຳລັງອານຸພາບນີ້ດ້ວຍເຫດປະການໃດນັ້ນຈາ ? ມະຫາມຸນຕີຈຶ່ງກ່າວວ່າດັ່ງນີ້ ດູລາ ມະຫາຣາດ ຂ້າພະບາດໄດ້ຂ້າໝູ່ໂຈນຍ້ອນເຂົ້າແດກາງ , ໄດ້ຂ້າຣາຊສີເຫດມີສັ້ນກຳດາບບໍ່ພົ້ນຫຼຸດຕີກລິງ ແລະຈັບໄດ້ພຍາສະຫະຣາເຊັນທະດົນດີ ດ້ວຍອານຸພາບບຸນອັນໄດ້ຫອນຮັບນັບມາແຕ່ກ່ອນ ພຍາຄັງຄາບຸຣີກໍຍິນດີຈຶ່ງໃຫ້ຮາງວັນເຂົ້າຂອງແກ່ ເທວະທັດຕະມະຫາມຸນຕີມາກນັກ.

ຜີໂຕນຶ່ງຊື່ວ່າ ທັດດຶມຸນຂີ ເວົ້າຂຶ້ນວ່າ "ຢ່າວ່າດ້ວຍບຸນສິ່ງດຽວນາ!" ເມື່ອບຸນມີແຕ່ທາງອຸບາຍບໍ່ໄດ້ກໍບໍ່ດີ ທີ່ມີອຸບາຍຮູ້ຕິປອງຈຶ່ງດີ ເປັນດັ່ງນິຍາຍພານຜູ້ຮູ້ຕິປອງນັ້ນ.

| | |
|---|---|
| ຜີທັງຫຼາຍຖາມວ່າ | ເຣື່ອງເປັນຢ່າງໃດ |
| ທັດດຶມຸນຂີ | ເລົ່ານິຍາຍ: |

## ນິທານທີ ໔.

## ເຣື່ອງຍັນຍະພານ.

ຍັງມີເມືອງ ໑ ຊື່ວ່າ ປະບັນຈະບຸຣີ ມີພານຜູ້ ໑ ຊື່ວ່າ ຍັນຍະພານ ມີລູກສາວຜູ້ ໑. ມີພານຜູ້ ໑ ກໍມາດູລັກຂນະລູກສາວມັນ ຮູ້ວ່າເປັນຄົນທຸຈຣິນີ (ຄົນບໍ່ດີ) ພານຜູ້ເປັນພໍ່ນັ້ນຈຶ່ງເອົາລູກສາວຂອງຕົນໃສ່ໄວ້ໃນກະຕຶບຄ່ອຍລ້ຽງດູ. ຍັງມີພານຜູ້ ໑ ຊື່ວ່າ ອຸປະຍັນຍະຮູ້ຂ່າວວ່າພານຜູ້ນັ້ນມີລູກສາວນັ້ນຈຶ່ງມາກະທຳເປັນມິດສະຫາຍຮັກເຄີຍກັນ ແລ້ວມັນກໍຂໍ

ເອົາລູກສາວນ້ອຍຜູ້ນັ້ນ ພານຜູ້ເປັນພໍ່ຈຶ່ງເວົ້າວ່າ ລູກເອົາກໍມີ ທີ່ວ່າມັນມີ
ລັກຂນະເປັນຄົນບໍ່ດີນາ ເອົາໃຫ້ແກ່ທ່ານບໍ່ໄດ້ແລ້ວ ອຸປະຍັນຍະພານຈຶ່ງ
ກ່າວວ່າ ພີທ່ານໃຫ້ແກ່ເອົາແທ້ ເອົາຫາກຈັກສອນມັນໃຫ້ເປັນຄົນດີດ້ວຍອຸ
ບາຍ ພານຜູ້ພໍ່ກໍໃຫ້ລູກສາວແກ່ອຸປະຍັນຍະຜູ້ນັ້ນ ແລ້ວມັນກໍເອົາເມືອໃສ່
ກະຕຶບໄວ້ ບໍ່ໃຫ້ຜູ້ນຶ່ງຜູ້ໃດຮູ້ເຫັນ ຄັນຍິງຜູ້ນັ້ນໃຫຍ່ມາ ພໍເປັນສາວແລ້ວ
ພານຈຶ່ງຄະນຶງວ່າ "ບັດນີ້ກູຈັກສອນມັນ" ມັນຈຶ່ງເອົາໄມ້ອັນ ໑ ມີປາຍ
ມ ງ່າ ເອົາກະດູກຫົວຜີອັນນຶ່ງ ພອງພາກຫ່າງອັນ ໑, ຄາບງູອັນເປັນສັງ
ວານຄໍອັນ ໑, ຖົງເທົ່າຂີ້ງົວອັນ ໑ ມາໄວ້ໃນກະຕຶບນັ້ນແລ້ວຈຶ່ງເອົາ
ສາວນ້ອຍຜູ້ນັ້ນເຂົ້າໄປຢູ່ໃນກະຕຶບທີ່ນັ້ນ ພານຜູ້ນັ້ນຈຶ່ງກ່າວວ່າດັ່ງນີ້ ນາງ
ຈົ່ງທະອົງເຄື່ອງຟູງນີ້ຈະງາມກວ່າເພີ່ນທັງຫລາຍ ແລ້ວກໍຄວີ້ຜົມ ແກ້ຜ້ານຸ່ງ
ຍິງຜູ້ນັ້ນອອກໝົດ ຈຶ່ງເອົາເທົ່າຂີ້ງົວທາຕົວ, ເອົາພອງພາກຫ່າງແຂວນ
ແຂວ ແລະເອົາຄາບງູຫ້ອຍຄໍສາວນ້ອຍຜູ້ນັ້ນຕ່າງສັງວານ ມືຊ້າຍໃຫ້ຖືຫົວ
ຜີ ມືຂວາໃຫ້ຖືໄມ້ ມ ງ່ານັ້ນແລ້ວ ໃຫ້ສາວນ້ອຍນັ້ນແລ່ນອອກມາ ກະທໍາ
ອາການຂະໂລໂພ ເປັນດັ່ງຫລອກໄປມານັ້ນແລ້ວ ຈຶ່ງໃຫ້ແລ່ນເຂົ້າໄປຢູ່
ພາຍໃນກະຕຶບນັ້ນຊູ່ວັນ ພານຈຶ່ງກ່າວດັ່ງນີ້ວ່າ ຊື່ວ່າຄົນທັງຫລາຍນີ້ຍ່ອມ
ຍ້ອນລໍາກະທໍາເພດສັບນີ້ຊູ່ຄົນ ຄັນມຶງເຫັນຜູ້ໃດມາຫາກໍດີ ມຶງຈົ່ງກະທໍາ
ສັບນີ້ລໍາແດງແກ່ຜູ້ນັ້ນເຖີ້ນ ມັນກໍສັ່ງສອນສາວນ້ອຍຜູ້ນັ້ນໃຫ້ທົງເພດສັບນີ້ຢູ່
ເຕິງນານ. ຍັງມີຄົນຫຼິ້ນກົນຜູ້ນຶ່ງ ໄປຫຼິ້ນໃຫ້ພຍາເບິ່ງດ້ວຍສາດສິນຂອງ
ມັນ ແລ້ວມາເຊົາຢູ່ໃນບ້ານທີ່ໃກ້ເຮືອນພານຜູ້ນັ້ນ ພານມະນີນ້ອຍຜູ້ນັ້ນກໍ
ສ່ອງອອກໄປຈາກປ່ອງຢ້ຽມກະຕຶບຈຶ່ງເຫັນຄົນຫຼິ້ນກົນຜູ້ນັ້ນ ແລະຄົນຫຼິ້ນກົນ

ຜູ້ນັ້ນກໍຫຼິງເຫັນນາງພານມະນີ ລອດມີໃຈຜູກພັນເນັ່ງພານ ດ້ວຍມາຍາອາການອັນຫຼາກ. ເມື່ອນັ້ນພານເຫັນຂາທັງສອງຫຼິງ ແລເຫຼືອດຕາຫາກັນດັ່ງນັ້ນ ມັນຄະນຶງວ່າ "ກູຈັກລອງດູໃຈນາງຜູ້ນີ້" ມັນຈຶ່ງກະທຳສັ່ງເນັ່ງວ່າ "ດູລານາງຂ້ອຍມີທີ່ໄປໜ້ອຍນຶ່ງ ເຈົ້າຄ່ອຍຢູ່ຮັກສາເຮືອນຊາຖ້າພີ່ເຖີ້ນ ບໍ່ນານເທົ່າໃດຂ້ອຍຈັກມາ" ມັນກະທຳອາການດັ່ງໄປແລ້ວ ກໍປີ້ນຄືນມາຢູ່ຕົ້ນໄມ້ແປະປະຕູບ້ານນັ້ນ ຊອນເບິ່ງເນັ່ງມັນກັບຄົນຫຼິ້ນກົນຜູ້ນັ້ນ ເມື່ອຄົນຫຼິ້ນກົນເຫັນເຮືອນພານສງັດຢູ່ສັ່ນນັ້ນ ມັນກໍນຸ່ງຜ້າຜືນດີປະດັບເນື້ອຕົນດ້ວຍເຄື່ອງຖນີມອາພອນແລ້ວ ກໍເຂົ້າໄປສູ່ເນັ່ງພານໃນກະຕົບນັ້ນ. ເນັ່ງພານໃສ່ໃຈວ່າຈັກປະດັບຕົນຕົວໃຫ້ຄົນຫຼິ້ນດູງາມ ຈຶ່ງເຂົ້າໄປສູ່ຫ້ອງພາຍໃນກະຕົບ ແລ້ວກໍແກ້ຜ້ານຸ່ງແລະຄວີ່ຜົມເສັ້ງ (ມືຍຜົມ) ເອົາເຖົ່າຊີ້ງົວທາຄີ້ງເອົາຄາບງູຫ້ອຍຄໍ, ເອົາພວງໝາກຫົ່ງແຂວນແອວແລ້ວ ມືຊ້າຍບາຍເອົາຫົວຜີ ມືຂວາຖືໄມ້ອັນມີປາຍ ມ ງ່າງນັ້ນແລ້ວ ກະທຳສຽງຮ້ອງດັ່ງສວ່າງໆແລ່ນອອກມາທີ່ຫາດ ເປັນດັ່ງຈັກຢາດບາຍເອົາ ຄົນຫຼິ້ນກົນຜູ້ນັ້ນ ມັນເຫັນຮູປອັນຍາງຮ້າຍ ຕົກໃຈກົວໜັງຫົວພອງຍີເຍືອກ ກົ້ງເກືອກລົ້ມທ່າວໄປຕົກຂັ້ນໄດຕີດູບຕີດູດ ເສື້ອຜ້າຫຼຸດເຄັ່ງເສັ້ງໝົດ ສັ່ນທີທົດແລ່ນຫາຄົນຜູ້ຈັກເປັນທີ່ເພິ່ງ. ຍາມນັ້ນພານຈຶ່ງລົງຈາກຕົ້ນໄມ້ມາຖາມວ່າເປັນດັ່ງລືມຶງມາຮ້ອງໄຫ້ ສັ່ງນີ້ຈາ? ຄົນຫຼິ້ນກົນກ່າວວ່າ ກູຢ້ານກົວນາກບັກ ພານວ່າມຶງຢ້ານກົວອັນໃດ ມັນວ່າເຮົາເຫັນຜີເຜດຮ້າຍໃນເຮືອນທ່ານຫັ້ນ ເຮົາກໍຢ້ານກົວໜັງຫົວພອງສຍອງລຸກມາກບັກ. ພານວ່າຜີເປັນດັ່ງລືມຶງຈຶ່ງຢ້ານກົວມັນນັ້ນ? ຄົນຫຼິ້ນກົນກ່າວບອກແກ່ພານວ່າ :

ດູລາ ພານຜູ້ດີມີພຍາແລະຄອນເປັນສະຫາຍແກ່ກູ ອັນວ່າເພດຜູ້ຍິງຜູ້ນີ້ ກະທຳໃຫ້ເປັນອັນຍ້ານກົວແລະຈັກຂ້າແທງຍັງກູ ດ້ວຍສ້ອມສາມງ່າໃນເຮືອນທ່ານຫັ້ນ ມີເພດຜູ້ນັ້ນມັນກໍເອົາຍັງເຂົ້າຂອງ ເສື້ອຜ້າແຫ່ງກູນີ້ໝີໝີດ ເຫດນັ້ນກູຈຶ່ງຍ້ານກົວມັນສົ່ນສາຍມາກນັກ ດັ່ງນັ້ນນັກປາດຜູ້ສລາດດ້ວຍຄອງໂລກ ຈຶ່ງກ່າວໂສກອັນນີ້ໄວ້ສນອງຄວາມຊາຍ:

| | | |
|---|---|---|
| ເລີຍລອດສແອງ | ສຸອະສາຍ | ໄຂວ່ຂວ້າງ |
| ໄຂປະຕູເຂົ້າເຮືອນ | ທ່ານທັກທ້ອງ | ໂຕນໜີ |
| ເລີຍເສັ້ງກຽດຕີຍົດ | ແລະສັກສີ | ທ່ານທ້າວ |
| ປະສົ່ງຂອງທັງວ້າວ | ແລ້ວເລີຍຈອບ | ຂອງດີ |

ພານຈຶ່ງພິຕິອຸບາຍວ່າ ຊາດພີຕາບອດຫູອກນີ້ ຫຼານຈຶ່ງໄດ້ຊຳຣະສະເກົ້າດຳຕິນເສັ້ງຈຶ່ງດີ ໃຫ້ມຶງເອົາສົ້ນປ່ອຍອັນກູມີນີ້ ໄປຊຳຣະສະຫົວມຶງເສັ້ງ ຄັນມຶງໄປທີ່ໃດຈຶ່ງຮ້ອງກ່າວວ່າຕີເພດມີຢູ່ໃນເຮືອນພານຜູ້ນັ້ນ ໃຫຢ່າຫຼອນເຂົ້າໄປໃກ້ໃນເຮືອນພານຜູ້ນັ້ນເຖີ້ນ! ມຶງອອກໄປນອກວຽງພຸ້ນແລ້ວອາບນ້ຳສະຕິນເສັ້ງຈຶ່ງຫາຍອັນຕາຍແກ່ມຶງ. ມັນໄດ້ຍິນພານບອກມັນກໍກະທຳຕາມຄຳພານນັ້ນ ເຮັດອາການດັ່ງເປັນບ້າ ແລ່ນໄປເຖິງທີ່ໃດມັນກໍຮ້ອງວ່າ ເພດມີໃນເຮືອນພານນັ້ນ ວ່າດັ່ງນັ້ນໄປຊູ່ແຫ່ງ ຄົນທັງຫຼາຍໄດ້ຍິນດັ່ງນັ້ນ ຕ່າງຄົນກໍຕ່າງຍ້ານກົວ ລວດບໍ່ເຂົ້າໄປໃນເຮືອນພານຜູ້ນັ້ນໄດ້. ສ່ວນຄົນຫູ້ນກົນຜູ້ນັ້ນກະທຳຊຳຣະຕົນຫົວແລ້ວ ລວດໜີໄປສູ່ທີ່ຢູ່ແຫ່ງມັນ ຍານໃດຄຶດເຖິງເຣື່ອງນັ້ນມາກໍເປັນທີ່ເພິ່ງກົວໜັງຫົວພອງສຍອງເສັ້ນຂົນລຸກສົ້ນສາຍຢູ່ຫັ້ນ.

ແຮກແຕ່ນັ້ນເມືອໜ້າໃນບ້ານເຮືອນພານຜູ້ນັ້ນ ບໍ່ມີຜູ້ໃດໄປຫາ ດ້ອຍເຫດນັ້ນ ຍິງຜູ້ນັ້ນຈຶ່ງລອດບໍ່ເຫັນຊາຍຜູ້ໃດຜູ້ອື່ນ ນອກຈາກພານນັ້ນ ບໍ່ນານທໍ່ໃດ ຍິງຜູ້ນັ້ນກໍຄືພານານ ດ້ອຍເຫດອັນໄດ້ສິນສູ່ຢູ່ກັບພານຜູ້ເປັນຜົວນັ້ນ ພານຜູ້ນັ້ນມັນຄະນຶງໃນໃຈວ່າ "ຍິງຜູ້ນີ້ມັນແກ່ມາແລ້ວ ອັນນຶ່ງຊາຍຜູ້ໃດຈັກເຂົ້າມາໃນທີ່ນີ້ກໍບໍ່ມີ ບັດນີ້ກູຈັກໃຫ້ມັນລະເສັຽຍັງເພດອັນຮ້າຍນີ້ກ່ອນແລ" ພານຈຶ່ງກະທຳຮູບຜູ້ຍິງອັນລະອຽດປະດັບປະດາອາພອນທັງນອນຄອນຫຼິງແລງານ ມັນກໍເອົາໄປໄວ້ໃນກະຕືບທີ່ນຶ່ງກັ້ງບັງໄວ້ແລ້ວ ຈຶ່ງອຸບາຍຈາກັບເມັຽວ່າ "ດູລານາງຍັງມີຮູບເທວະດາອັນນຶ່ງຂ້ອຍໄດ້ມາໄວ້ຫັ້ນ ເຈົ້າຢ່າໄດ້ໄຂເບິ່ງເນີ." ນາງພານໄດ້ຍິນກໍໃຄ່ຢາກເຫັນມັນຈຶ່ງກ່າວຕໍ່ຜົວວ່າ "ອັນໃດເຈົ້າວ່າດີວ່າງາມຂ້ອຍກໍຢາກຮູ້ຢາກເຫັນ ຂໍເຈົ້າຈົ່ງສຳແດງແກ່ຂ້ອຍໃຫ້ໄດ້ເຫັນແດ່ຖ້ອນ" ມັນກໍຂໍເບິ່ງເຖິງ ໔ ທີ ນ ທີແລ້ວພານຈຶ່ງໄຂຮູບອັນງາມນັ້ນໃຫ້ເມັຽເຫັນ ເມັຽຈຶ່ງເວົ້າກັບຜົວວ່າ ເພດອັນຂ້ອຍກະທຳນີ້ບໍ່ເປັນດີສັ້ງສັກອັນ ບໍ່ວ່າຕ່າງຮ້າຍນັກລື ເຈົ້າແລມາກະທຳເພດເປັນດັ່ງນີ້ໃຫ້ແກ່ຂ້ອຍສັ້ງຈາ? ພານກ່າວວ່າຜີເຈົ້າຍັງຕັ້ງຢູ່ໃນຄຳສອນແຫ່ງຂ້ອຍແທ້ ຂ້ອຍກໍຈັກກະທຳເພດອັນດີແຫ່ງເຈົ້າ. ເມັຽຕອບວ່າຂ້ອຍຈັກຕັ້ງຢູ່ໃນຄຳສອນແຫ່ງເຈົ້າ ຊຸ່ປະການແລ້ວພານກໍຈຶ່ງເອົາເຄື່ອງອັນຮ້າຍນັ້ນໄປເຜົາເສັຽ ແລ້ວຈຶ່ງເອົາເຄື່ອງປະດັບປະດາອາພອນອັນງາມໃຫ້ແກ່ເມັຽມັນ ແລະໃຫ້ຊຳຮະສະເກດເກົ້າເກສາເສັຽແລ້ວ ຈຶ່ງມາໃສ່ເຄື່ອງປະດັບປະດາຖນິມອາພອນອັນງາມຍິ່ງນັກ.

ໄປບໍ່ນານທີ່ໃດເມັຽພານຜູ້ນັ້ນ ກໍອອກລູກຊາຍຜູ້ນຶ່ງ ມັນຄ່ອຍລ້ຽງດູລູກໃຫຽ່ມາກ້າສູງ ສ່ວນບາງພານນັ້ນ ກໍຕັ້ງຢູ່ໃນຄຳສອນແຫ່ງພານນັ້ນລອດໄດ້ເປັນໃຫຽ່ ເປັນດີແກ່ສີສົມບັດໃນເຮືອນພານນັ້ນ. ຜີຜູ້ຊື່ທັດຖິນຸກໍຂີກ່າວວ່າ "ຢ່າອ້າງທີ່ວ່າມີແຕ່ບຸນສິ່ງດຽວຊ່ວຍຊູນັ້ນເຖີ້ນ" ພານຜູ້ນີ້ມີອຸບາຍກໍຍັງໃຫ້ແລ້ວປໂຍດໄດ້ດັ່ງໃຈນັກແຫ່ງມັນແທ້ ເມື່ອມີບຸນແລບໍ່ກະທຳອຸບາຍດ້ວຍພຍາກໍບໍ່ອາດໃຫ້ແລ້ວປໂຍດໄດ້ເລີຍ.

ຜີໂຕ ໑ ຊື່ວ່າສີຫະນຸຂີກໍກ່າວວ່າ ເອີ! ວ່າຜູ້ໃດບໍ່ມີພຍາແລສລາດຮູ້ຕົປອງອຸບາຍດ້ວຍນິຍາຍຖ້ອຍຄຳຂອງນັກປາດເຈົ້າທັງຫຼາຍສັ່ງສອນນັ້ນກໍບໍ່ອາດຈັກໄດ້ເຖິງເຊິ່ງອັນສຸກສວັສດີຕາມໃຈນັກດາຍ.

ຜີທັງຫຼາຍຖາມວ່າ ເຣື່ອງເປັນຢ່າງໃດ ?

ສີຫະນຸຂີ ເລົ່ານິຍາຍ

ນິທານທີ ໓

<u>ເຣື່ອງພຍາອຸດທະຣາຊອະ</u>

ດູລາຜີທັງຫຼາຍ ໃນປາງກ່ອນພຸ້ນ ມີເມືອງ ໑ ຊື່ວ່າ ຮັກສາຣັມພະຣາຊທານີ ມີພຍາຕົນນຶ່ງຊື່ວ່າ ພຍາອຸທຣາຊອະໄດ້ສເວີຍຣາຊສົມບັດບ້ານເມືອງນັ້ນ ຕັ້ງແຮກແຕ່ພຍາອຸທຣາຊອະໄດ້ເປັນພຍາ ມາສິ້ນກາລະນານພຍາຍ່ອມລັກຂາຄົນຝູງມານອນເຝົ້າໂຮງຄືນໃດຄືນນຶ່ງທຸກຄືນ. ມີວັນ ໑ ເວນເມື່ອນອນເຝົ້າໂຮງພຍານັ້ນ ມາຖືກອານາດຜູ້ນຶ່ງຊື່ວ່າສຸໂພຄະມັນໄດ້ຍິນຂ່າວອັນນັ້ນມາເຖິງຕົນ ຈຶ່ງກ່າວແກ່ມິດຕະສະຫາຍລູກເມັຽວ່າ "ເຈົ້າທັງຫຼາຍລູກຈັກໄດ້ເຫັນໜ້າສູເຈົ້າທັງຫຼາຍບັດດຽວນີ້ແລ ຍາມນຶ່ງນີ້ພໍ່ຄ່ຳມືດູ

ຈັກຕາຍແທ້ບໍ່ສົງສັຍ" ມັນກ່າວແລ້ວເອົາຂອງມີອັນໃດຄ່ອນປັນກິດິກແຕ່ງ
ແບ່ງປັນໃຫ້ແກ່ເຂົາຊຸຄົນ. ເມື່ອຄົນທັງຫຼາຍຮູ້ຂ່າວວ່າສຸໂພຄະອານາດນັ້ນ
ຈັກຕາຍແທ້ ເຂົາກໍຮ້ອງໄຫ້ຕີອົກຕີທ້ອງຊະອືກຊະອື້ນຄັ່ງທ່ວງມາກນັກ
ຍັງມີລູກຊາຍຜູ້ນຶ່ງຊື່ວ່າ "ສຸພະທະກຸມມານ" ໄດ້ຍິນຄຳພໍ່ວ່າຈັກຕາຍກໍຮ້ອງ
ໄຫ້ແລ້ວຖາມວ່າ ພໍ່ຈັກຕາຍດ້ວຍເຫດການອັນໃດ? ພໍ່ກ່າວວ່າ ລູກຮັກພໍ່
ເວນອັນນອນເຝົ້າໂຮງພຍາເຈົ້ານາເຖິງແກ່ພໍ່ແລ້ວພໍ່ຈັກໄດ້ເມືອນັ່ງເຝົ້າ
ໂຮງພຍາຄືນນີ້ ເພາະວ່າພຍາເຈົ້າເຮົານີ້ ຍ່ອມຂ້າຜູ້ເມືອນອນເຝົ້າຄືນ
ໃດຄືນນຶ່ງທຸກຄືນ ເຫດດັ່ງນັ້ນພໍ່ຈັກຕາຍແທ້ຄືນນີ້ບໍ່ຄາດບໍ່ຄາແລ. ສຸພະ
ທະກຸມມານໄດ້ຍິນຄຳພໍ່ຈຶ່ງກ່າວວ່າ ພໍ່ເປັນເຈົ້າຂຶ້ນຊື່ວ່າພໍ່ແມ່ນີ້ລ້ຽງມາ
ຍາກນັກ ຫລັງຢາກກິນແຮງຮັກແພງລູກເຕົ້າໄວ້ ໃຫ້ກະທຳບົວຣະບັດພໍ່
ແມ່ໄດ້ຢູ່ເຢັນເປັນສຸກສຳຣານ ສ່ວນລູກນີ້ພໍ່ລ້ຽງຍາກຫາກຈັກກະທຳຄຸນ
ຕອບພໍ່ເປັນເຈົ້າ ລູກຈັກເມືອເຝົ້າໂຮງພຍາຕາຍຕາງພໍ່ ແຕ່ວ່າພໍ່ຫ້າມ
ວ່າບໍ່ໃຫ້ເມືອ ເຈົ້າຍັງໜຸ່ມນ້ອຍຈິ່ງຄອຍກະທຳສ້າງສາຄາຣະວາດຢ້າວ
ເຮືອນພໍ່ເຖີ້ນ. ສ່ວນພໍ່ນີ້ເຖົ້າແກ່ຊະຣາການແລ້ວ ພໍ່ຫາກຈັກຕາຍກໍພໍ່ແລ
ລູກທີ່ຢູ່ຮັກສາຢ້າວເຮືອນລ້ຽງແມ່ລູກດ້ອນ. ສຸພະທະຕອບວ່າພໍ່ເຖົ້າແກ່
ຊະຣາຈັກມໍຣະນາຕາຍດ້ວຍອາຍຸບໍ່ສູດແລະຈັກຕາຍເຫດຫ່ານ ຂ້າດ້ອຍ
ຫອກດາບ ດັ່ງລືແລຈັກໃຫ້ລູກອົດຢູ່ໄດ້ນີ້ຈາ ນາລູກຈັກອາສາຕາຍຕາງຕໍ່
ພໍ່ຫ້າມທີ່ໃດມັນກໍບໍ່ຟັງ ເຖິງຍາມອັນຈັກເມືອນອນ ມັນກໍເອົາເຄື່ອງອັນຈັກ
ນອນເຝົ້າພຍານັ້ນໄປ ຄັນເມືອເຖິງມັນກໍຮັບຄຳອາຈຍາທີ່ເຝົ້າແທນສືບຜູ້
ເຝົ້າເມື່ອກ່ອນນັ້ນ ຍາມຕາວັນຕົກ ສຸພະທະມານະວະນັ່ງຢູ່ໂຮງພຍາມັນ

ຄະນິງວ່າ ອາຈານສັ່ງສອນກູວ່າ "ທີ່ສຸກຢ່ານອນ, ເມັ່ຽອອນຢ່າຍືນ, ນັກກິນຢ່າຄ້ານສັບປີ້ນາ! ທີ່ນີ້ເປັນທີ່ນອນສຸກຄືກເນື້ອເພິງໃຈ ທີ່ແທ້ຂຶ້ນຊື່ວ່າ ເຮືອນຫ້າວພຍານີ້ກໍເປັນສະຖານອັນສງ່າ ບໍ່ຄວນກູຈັກຫຼັບຈັກນອນລືມເນື້ອລືມຄີງເສັຽບໍ່ດີ" ຄືດດັ່ງນີ້ແລ້ວມັນກໍບໍ່ຫຼັບບໍ່ນອນ ເຖິງປະຖົມຍາມພໍຫຼັບຄົນທັງຫຼາຍກໍນອນຫຼັບໄປຊູ່ຄົນແລ້ວ ພຍາລອດຄືດາບສີຂັນໄຊໄຂປະຕູອອກມາຕູ້ດຽວ ຍາມນັ້ນສຸພະທະມານະອະໄດ້ຍິນ ສຽງປະຕູດັງກອກແກກ ມັນກໍກະທຳສຽງ ອີຕີ! ແລ້ວກ່າວວ່າ ໂອນໍ ອັສຈັນນໍ! ດັ່ງນີ້. ພຍາໄດ້ຍິນຄຳອັນນັ້ນກໍຄືນເຂົ້າໄປສູ່ທີ່ບັນທົມແລ້ວ ເຖິງຍາມຖ້ອນ ໒ ພຍາກໍບາຍດາບອອກມາ ມັນເລົ່າຮູ້ສັນຍາກະທຳສຽງ ອະຕີ! ແລ້ວກ່າວວ່າ ໝ່າຍນໍ ອັສຈັນນໍ! ພຍາກໍເລົ່າເຂົ້າເມືອໃນແລ້ວ ເຖິງຍາມຖ້ອນ ໓ ພຍາເລົ່າຖືດາບອອກມາອີກມັນຮູ້ສັນຍາກະທຳສຽງສຳແດງອັນບໍ່ຫຼັບແລ້ວກ່າວວ່າ ອັນຈັນເປັນສັນໃດນີ້ນໍ! ພຍາໄດ້ຍິນຄຳອັນນັ້ນ ກໍຄືນເຂົ້າໄປໃນຜາສາດ ຄັນເຖິງຍາມຖ້ອນ ໔ ຄົນນອນສງັດ ບໍ່ມີໃຜທ້ອງໃຜຕິງສັກຄົນແລ້ວ ພຍາເລົ່າຖອດດາບອອກມາດັງຂັບ ສຸພະທະມານະອະກະທຳອາການອັນບໍ່ຫຼັບ ຈຶ່ງກ່າວຂັບພຍາວ່າ ໂອນໍ ອັສຈັນເປັນສິ່ງສັນໃດນີ້ນໍ! ພຍາໄດ້ຍິນຄຳຫຼາກກໍຈຶ່ງວາງງ້າວ ເຂົ້າເມືອໃນປະທັບຢູ່, ຄັນຮຸ່ງເຊົ້າພຍາຈຶ່ງໃຊ້ຄົນຜູ້ຮັກສາດາບໃຫ້ພຍານັ້ນໄປຖາມວ່າ ຜູ້ໃດມານອນໂຮງພຍາເຈົ້າຄືນນີ້? ມັນຂານວ່າ ແມ່ນຜູ້ຂ້າສຸພະທະມານະອະອັນເປັນລູກສຸໂພຄະອາມາດ ຄົນໃຊ້ຈຶ່ງຖາມວ່າ ພໍ່ເຈົ້າເປັນສັງບໍ່ມາ? ມັນຕອບວ່າ ພໍ່ຜູ້ຂ້າ ເປັນພຍາດມາໄຫວ້ພຍາເຈົ້າບໍ່ໄດ້ ຈຶ່ງໃຫ້ຜູ້ຂ້າມາ

ຕາງກໍຂ້າດາຍ: ຄົນໃຊ້ກໍຖາມຄວາມປາກດູວ່າ ກາງຄືນທ່ານນອນບໍ່ຫຼັບ ໃນໂຮງພຍາໃຜບໍ່ປາກບໍ່ຈາສັກຄົນ ທ່ານຜູ້ດຽວທາງກາງສັນນີ້ ທ່ານເປັນບ້າປາກລື ຮູ້ວ່າເປັນພິດເປັນໄພຍສັນໃດນັ້ນ? ສຸພະທະມານະວະຈຶ່ງກ່າວແກ່ຄົນໃຊ້ຜູ້ນັ້ນວ່າ ດັ່ງນີ້ເຈົ້ານາຍດາບເອີຍ ເຈົ້າຈົ່ງເອົາຄຳຜູ້ຂ້າໄປໄຫວ້ພຍາເຈົ້າໃຫ້ແຈ້ງເຖີ້ນ ຜູ້ຂ້ານີ້ບໍ່ເປັນບ້າປາກຫຼົງໃຫຼເວົ້າໃນຄຳອັນບໍ່ມີຜູ້ຂ້າຮ່ຳເພິງ ເຖິງຄຸນອາຈານສັ່ງສອນ ນອນຈຶ່ງບໍ່ຫຼັບໄດ້ລອດກ່າວເຖິງຄຸນອາຈານນັ້ນ ຄົນໃຊ້ຜູ້ນັ້ນ ຈຶ່ງໄປຂາບທູນພຍາໃຫ້ຊົງຊາບ ພຍາໄດ້ຍິນຄຳດັ່ງນັ້ນ ກໍຍິນດີຊຳຣະເນື້ອຕົນແລ້ວກໍສເວີຍເຂົ້ານ້ຳໂພຊນະອາຫານແລ້ວມານັ່ງປະທັບຢູ່ໃນກາງໂຮງຫຼວງ ມີໝູ່ອາມາດຣາຊນຸນຕີທັງຫຼາຍຢາຍເປັນບໍຣິວານແລ້ວ, ຈຶ່ງຖາມສຸພະທະມານະວະວ່າ ດູລາມານະວະ ຖ້ອຍຄຳອັນກ່າວໃນເທື່ອທີ ໑, ທີ ໒, ທີ ໓, ທີ ໔, ສັ້ນຄົນຮຸ່ງມີດັ່ງນັ້ນ ທ່ານຈົ່ງບອກຂ່າວຍັງຖ້ອຍຄຳທັງນອນນັ້ນ ພ້ອມທັງອະທິບາຍມາໃຫ້ແຈ້ງແກ່ເຮົາໃນກາລະບັດນີ້ເຖີ້ນ. ເມື່ອນັ້ນສຸພະທະມານະວະຈຶ່ງກ່າວວ່າ ຂ້າແດ່ມະຫາຣາຊເຈົ້າ ອາຈານຂ້າພະບາດສັ່ງສອນຄຳ ໓ ຈຳພວກແກ່ຂ້າພະບາດ ຄຳ ໓ ຈຳພວກອັນຂ້າພະບາດນອນໂຮງມະຫາຣາຊເຈົ້ານີ້ ເຂົ້າໃນຄຳສອນຈຳພວກ ໑ ເຫດນັ້ນຂ້າພະບາດຈຶ່ງນອນບໍ່ຫຼັບ ແລະໄດ້ກ່າວໄດ້ປາກຢູ່ ຄຳອັນຂ້າພະບາດວ່າ " ອັສຈັນ " ເມືອປະຖົມທົວທີນັ້ນຂ້າພະບາດອາສັຍຊຶ່ງແຜ່ນດິນທີ່ທ່ານຂຸດຈັກເອົາເສົາໃສ່ນັ້ນ ດິນທີ່ນັ້ນ ເມື່ອບໍ່ຂຸດກໍຫາກເຕັມພຽງດີ ເມື່ອຂຸດເອົາຂີ້ຂວຍອອກແລ້ວ ແລະເອົາເສົາໃສ່ລົງຕື່ມ ທັງເອົາດິນຂີ້ຂວຍນັ້ນໃສ່ລົງດັ່ງເກົ່າກໍບໍ່

ສອດບໍ່ເຕັມຂຸມອັນນັ້ນ ເຫດນັ້ນຂ້າພະບາດຈຶ່ງກ່າວວ່າ "ອັສຈັນນໍ" ຖ້ອນ ໑ ແລ ເມື່ອຍາມຖ້ອນ ໒ ນັ້ນຂ້າພະບາດວ່າ "ໜ່າຍນໍອັສຈັນນໍ" ຄຳອັນນັ້ນ ຂ້າພະບາດອາສັຍຊຶ່ງຫ້ອງແມ່ນານມີປຸ່ມອັນໃຫຽ່ເຕັມດ້ອຍລູກ ຫາບ່ອນຈັກໃສ່ອາຫານກາບູກິນບໍ່ໄດ້ແລ້ວ ເລົ່າຍັງກິນເຂົ້ານ້ຳໂພຊນະ ອາຫານມາກນັກ ອາຫານທັງນອນນັ້ນຈັກໄປຢູ່ທີ່ໃດນັ້ນຈາ? ຂ້າພະບາດ ຍັງບໍ່ຮູ້ທີ່ຢູ່ແຫ່ງອາຫານໄດ້ແທ້ດີ ຂ້າພະບາດລອດກ່າວວ່າ "ໜ່າຍນໍ ອັສຈັນນໍ" ຖ້ອນ ໒ ຫັ້ນ. ເມື່ອຍາມຖ້ອນ ໓ ນັ້ນຂ້າພະບາດອາສັຍຊຶ່ງ ງູແລກ່າວວ່າ "ໜ້າອັສຈັນນໍ" ເຫດງູທັງຫຼາຍນັ້ນບໍ່ມີຕີນແລອາດໄປໄດ້ ໃນສະຖານຊູ່ແຫ່ງຂຶ້ນຕົ້ນໄມ້ກໍເຮອພລັນ ຕີ່ວ່າຕາມມັນບໍ່ມີຕີນນັ້ນ ບໍ່ຄວນ ວ່າຈັກໄປໄດ້ ນາໜ້າອັສຈັນຈຶ່ງກ່າວເປັນຖ້ອນ ໓ ເກີດອັສຈັນເມື່ອຍາມ ໃກ້ຮຸ່ງນັ້ນ ຂ້າພະບາດອາສັຍຊຶ່ງແມ່ໄກ່ ເຫດແມ່ໄກ່ທັງຫຼາຍນີ້ບໍ່ມີນົມສັກ ເຕົ້າແລເຫດໃດນາລ້ຽງລູກແຕ່ອອກມາຫຼາຍປີຈາ ຕີ່ວ່າຕາມອັນຫານົມບໍ່ ໄດ້ນັ້ນ ຄືວ່າຈັກລ້ຽງລູກບໍ່ເປັນສັກຕົວນາ ຂ້າພະບາດເຍັນດີ ອັສຈັນອັນ ນັ້ນ ຈຶ່ງກ່າວຖ້ອນ ໔ ແລ. ເມື່ອສຸພະທະນານະວະສນອງຄຳທັງນອນ ແກ່ພຍາແລ້ວຈຶ່ງກ່າວວ່າ ຂ້າແດ່ມະຫາຣາຊເຈົ້າຕົນປະເສີດ ຜູ້ຂ້າອາ ສັຍຊຶ່ງອັສຈັນຄືຂຸມເປັນປະຖົມ, ຫ້ອງແມ່ນານເປັນຖ້ອນ ໒, ງູອັນຫາ ຕີນບໍ່ໄດ້ເປັນຖ້ອນ ໓, ແລະແມ່ໄກ່ອັນຫານົມບໍ່ໄດ້ເປັນຖ້ອນ ໔ ຜູ້ຂ້າ ກ່າວໃນກາງຄືນນີ້ອັນນອນບໍ່ຫຼັບນັ້ນມີອະທິບາຍ ດັ່ງນີ້.

ດັ່ງນັ້ນເທວະດາຕົນຮັກສາໂລກເລົ່າກ່າວໂສກອັນນີ້ໄວ້ໃຫ້ຄົນຈື່ຈຳ ຊຸດຂຸມເສົາໃສ່ແຜ່ນດິນຖົມບໍ່ສອດພຽງພໍສົມສິ່ງກັນ ກັບຍິງທະອິງຄັບນັ້ນ

ຄືງກິນງານທ້ອງໃຫຍ່ ກິນເຂົ້າກໍບໍ່ຂຶ້ນບໍ່ໃຄ່ຕື່ນໜ່າຍນໍ! ອັສຈັນ ງູບໍ່ມີຕີນ
ເມືອປີນຕາຂຶ້ນໄມ້ກໍຍັງໄປໄດ້ ແມ່ໄກ່ບໍ່ມີນົມລ້ຽງລູກຕົນກໍຍັງໃຫຍ່ໄດ້
ໂອນໍ ອັສຈັນແທ້ນໍ!.

ພຍາໄດ້ຍິນຄໍາອັນນີ້ແລ້ວ ເລົ່າຖາມສຸພະທະມານະອະນັ້ນວ່າ ດູ
ລາ ມານະອະຄໍາສອນ ອາຈານເຈົ້າ ມ ປະການນັ້ນວ່າສິ່ງໃດຈາ? ສຸ
ພະທະມານະອະຈຶ່ງກ່າວວ່າ ຂ້າແດ່ມະຫາຣາຊເຈົ້າອາຈານສອນຂ້າວ່າ
ອັນນຶ່ງຮັກນາງເທວີນັກ ພຍາເປັນພຍາດ! ມີກໍາລັງນັກກໍສິ້ນອາຍຸຕາຍ
ໄປພລັນ ແລະມີໃຈອັນຮັກເມັຽນັກ ກໍໄດ້ໄປເກີດເປັນງູພິດຕົວນ້ອຍຢູ່ໃນ
ຮູດັງນາງເທວີນັ້ນແລນາ.

ເມື່ອນັ້ນຊາວເມືອງທັງຫຼາຍ ມີຕົນວ່າເສນາມຸນຕີກໍເລີກຊາກສົ່ງ
ສະການພຍາແລ້ວເຂົາກໍເອົານ້ອງພຍາກັບນາງເທວີ ໃຫ້ເອົາກັນເປັນ
ເຈົ້າເມືອງແທນພີ່ພຍາຜູ້ເປັນນ້ອງໄດ້ສົມສູ່ກັບນາງເທວີແລ້ວ ເວລາ
ກາງຄືນ ງູພິດຕົວນັ້ນກໍອອກມາຕອດພຍາຕົນນ້ອງລອດຕາຍໄປໃນທີ່ນັ້ນ
ຕັ້ງແຕ່ນັ້ນມາຍາດພີ່ນ້ອງພຍາສືບໆກັນມາ ໄປສົມສູ່ຢູ່ກິນດອມນາງເທວີຜູ້
ນັ້ນລອດຕາຍໄປດ້ວຍງູພິດອັນອອກຈາກຮູດັງນາງເທວີມາຂົບນັ້ນ ລໍາດັບ
ນັ້ນລວດມາເຖິງເສນາອາມາດຜູງເປັນໃຫຍ່ເປັນປະທານ ໄປສົມສູ່ຢູ່ກັບ
ນາງເທວີນັ້ນກໍຈິບຫາຍຕາຍໄປມາກນັກ ຫາຜູ້ຈັກເປັນທ້າວພຍາຮັກສາ
ບ້ານເມືອງບໍ່ໄດ້ ຊາວເມືອງທັງຫຼາຍຈຶ່ງປຶກສາກັນວ່າບ້ານເມືອງອັນໃດ
ບໍ່ມີທ້າວພຍາຮັກສາຍ່ອມຈິບຫາຍເສັຽແກ່ຂ້າເສິກສັດຕູ ເຂົາຈຶ່ງພິຈາຣະ
ນາດູໄດ້ຍັງລູກກະກຸນຜູ້ນຶ່ງມີຮູບໂສມງາມຮູ້ຫຼັກກ່າວຄົນທັງຫຼາຍ ເຂົາກໍ

ເອົາເປັນພຍາລອດອາຊາພິເສກກັບນາງເທວີນັ້ນ ຊາຍຜູ້ນັ້ນມີພຍານາກ ຈິ່ງຮີບຕອງພິຈາຣະນາວ່າ "ທີ່ສງັດຢ່ານອນ" ຄຳສອນກູຍັງກ່າວດັ່ງນີ້ ຍັງເປັນທີ່ລັງກຽດຮ້າຍ ເຫດນາງນີ້ເປັນແມ່ໜ້າຍຫຼາຍຜົວ ພຍາຜູ້ຊອຍນີ້ ຈິ່ງພິຈາຣະນາດູລັກສນະອາການໃນເນື້ອຕົນນາງເທວີນັ້ນ ກໍບໍ່ເຫັນອັນ ຫຼາກອັນຕ່າງສັກອັນ ພຍາຈິ່ງຫຼີງດູໜ້າຕານາງເທວີ ເມື່ອນາງນອນຫຼັບກໍ ເຫັນງູພິດຮ້າຍຕົວນັ້ນອອກມາເລົ່າອາການນາງເທວີແລ້ວກໍເຂົ້າໄປລີ້ຢູ່ໃນ ຮູດັງນາງເທວີ ມັນຈິ່ງທຳອຸບາຍຈັກກູບມືລູບແກ້ມນາງເທວີ ຍາມນັ້ນງູຕົວ ນັ້ນກໍອອກຈາກຮູດັງມາຈັກຕອດ ມັນຈິ່ງຖອດຂັນໄຊສີສີວຄໍງູຕົວນັ້ນຕາຍໄປ ແລ້ວ ມັນລອດໄດ້ເປັນພຍາສເວີຍອາຊສົມບັດເປັນເຈົ້າສຸຂສວັສດີຈຳເຣີນ ໄປພາຍໜ້າ.

ເຫດດັ່ງນັ້ນນັກປາດຕົນສລາດຄອງໂລກ ຈິ່ງກ່າວໂສກອັນນີ້ໃຫ້ຄົນຈື່ ຈຳໄວ້ "ທີ່ໃດສນຸກຢ່ານອນຫຼັບລືມສະຕິແທ້ ໃຫ້ພິຈາຣະນາຕາມຄຳອາ ຈານສັ່ງສອນແອ້ວງ ຫ້າມໂພຍພັຍກັບບັງເກີດກະເສີມສີ."

"ເມັຽອອນຢ່າຍິນດີ"ນັ້ນ ຍັງມີຊາຍຜູ້ ໑ ມັນໄປຄ້າກັບພໍ່ຄ້າທັງ ຫຼາຍປະເມັຽໄວ້ພາຍຫຼັງແລ້ວເມັຽກໍຫຼີ້ນຊູ້ ມັນໄປສິ້ນກາລະນານ ເຖິງທີ່ ໑ ໄດ້ຄຳພັນ ໑ ກັບທັງແກ້ວແຫວນແສນສິ່ງ ມັນກໍບໍ່ບອກແກ່ຜູ້ໃດຈັກຄົນ ເມື່ອກັບຄືນມາມັນຄະນຶງໃນໃຈວ່າ ເມັຽກູຢູ່ບ້ານຍັງເປັນໃຈກູຊື່ ຮູ້ວ່າມີ ໃຈຕ່າງຈາກກູແລ້ວກໍບໍ່ຮູ້ແລນໍ! ນາກູຈັກຝັງເຂົ້າຂອງຝູງນີ້ໄວ້ກ່ອນ ມັນ ຈິ່ງຝັງຂອງຝູງນັ້ນໄວ້ແທບຕົ້ນໄມ້ຕົ້ນນຶ່ງນອກບ້ານ. ມັນກໍເມືອສູ່ເຮືອນ ແຫ່ງຕົນດ້ວຍມືເປົ່າ ຝ່າຍເມັຽເຫັນຜົວມາຮອດ ກໍແລ່ນມາຕ້ອນມາຮັບຜົວ

ເມືອເຮືອນກິນເຂົ້າແລ້ວກໍພ້ອມກັນນອນ ເມັ້ງຈຶ່ງຖາມຜົວວ່າ ເຈົ້າໄປຄ້າໄດ້ສັງມາຫາຢາວເຮືອນຮານີ້ຈາ? ຜົວກ່າວວ່າຂ້ອຍຍັງໄດ້ຂອງມາອັນລະເລັກລະນ້ອຍ ເຈົ້າກໍຫາກຈັກເຫັນດອກ ເມັ້ງອອນຖາມເທົ່າໃດກໍດີມັນຈຶ່ງຄະນຶງວ່າພໍ່ກູສອນໄວ້ວ່າ "ເມັ້ງອອນຢ່າຍິນດີ" ດັ່ງນັ້ນ ບັດນີ້ຍິງຜູ້ນີ້ມາຈີກຈອກວອກວອນຄວາມຖາມແກ່ກູຢູ່ດັ່ງນີ້! ມັນຄືດດັ່ງນີ້ແລ້ວລອດບໍ່ບອກວ່າກູໄດ້ມາທີ່ນີ້ ກູໄວ້ໃນທີ່ນັ້ນໃຫ້ເມັ້ງມັນຮູ້ ມັນຈຶ່ງຄະນຶງວ່ານີ້ຄືນມາສິນສູ່ຢູ່ນອນກັບເມັ້ງກູບໍ່ຢ່າແລ ມັນຈຶ່ງອ້ອນວອນກູຢູ່ສັ້ນນີ້ ແຕ່ນັ້ນເມັ້ງມັນໜຶ່ງວອອນຕໍ່ຜົວວ່າ ຖ້າເຈົ້າບໍ່ບອກເລົ່າເຂົ້າຂອງແກ່ຂ້ອຍດັ່ງນັ້ນເຈົ້າຢ່າໄດ້ມານອນນຳຂ້ອຍ ຄັນວ່າເຈົ້າມານອນນຳຂ້ອຍໆ ກໍຈັກລຸກໜີຊາຍຜູ້ນັ້ນກໍລືມຄວາມຮູ້ແຫ່ງມັນເສັ້ງ ລອດຮ່ຳເພິງວ່າ ຄັນກູບໍ່ບອກເຂົ້າຂອງໃຫ້ແກ່ມັນໆກໍບໍ່ມີໃຫ້ກູໄດ້ນອນກອດ ຖືກເນື້ອຕ້ອງກາຍນາງເມັ້ງນີ້ຄອນກູຈັກບອກໃຫ້ແກ່ມັນແລ້ວມັນຈຶ່ງບອກເລົ່າ ເຂົ້າຂອງອັນຝັງໄວ້ແທບເຄົ້າໄມ້ນັ້ນໃຫ້ແກ່ເມັ້ງໃນຄືນນັ້ນ ຊາຍຊູ້ມັນມາຢູ່ໃຕ້ເຮືອນຫັ້ນໄດ້ຍິນຄຳຈຶ່ງລັກໄປຂຸດເອົາໝົດບໍ່ໄວ້ເຂົ້າຂອງຢູ່ນັ້ນ ໃຫ້ແກ່ສອງຜົວເມັ້ງຈັກສິ່ງຄັນຮຸ່ງເຊົ້າວັນລຸນມາຂາສອງຜົວເມັ້ງກໍພາກັນອອກໄປ ວ່າຈັກພາກັນໄປຂຸດເອົາເຂົ້າຂອງທີ່ຝັງໄວ້ນັ້ນ ກໍ່ເຫັນຮອຍຄົນມາຂຸດເອົາໄປກ່ອນແລ້ວກໍຄືດໂສກໂທມະນັດຄັ່ງແຄ້ນຫົວໃຈນາກນັກ.

ນັກປາດເຈົ້າຕົນຮູ້ຄອງໂລກ ຈຶ່ງກ່າວໂສກອັນນີ້ໄວ້ໃຫ້ລືຊາ.

ຊາຍໃດເຊື່ອຊ້າ　　　　ມັກການ

ເມັ້ງອ້ອນວອນຖາມ　　　　ຜົວບອກ

ຄຳຣະຫັດ (ໃບບອກ) ໂດຍດີ
ເລົ່າເລີຍລອດເສັ້ງສີ ທຸກເອື້ອງ
ເປັນເຫດຄືນກ່າວເອື້ອງ ໃຫ້ຫງັນຊະແລ

"ມັກກິນຢ່າຄ້ານ"ນັ້ນ ຍັງມີລູກເສດຖີຜູ້ນຶ່ງ ພໍ່ມັນສັ່ງສອນວ່າ ມຶງມັກກິນຢ່າຄ້ານ, ພອຍບ້ານຕາງຮຽນຮູ້ກະທຳການກໍພໍເນີ! ມັນບໍ່ຟັງຖ້ອຍຄຳໄປຫຼິ້ນຕາມໃຈມັກແຕ່ງຕົນຢູ່ ເມື່ອພໍ່ມັນຕາຍໄປປະເຂົ້າຂອງສົມບັດໄວ້ໃຫ້ແກ່ມັນເປັນອັນມາກ. ມັນບໍ່ຢູ່ຕາມຮີດຄອງອັນດີ ໂຖງອິດຖີມັກຫຼິ້ນໝາກຮຸກໝາກສະກາໝາກບັກ ເຂົ້າຂອງມີຫຼາຍລອດຈົບຫາຍເສັ້ງສິ້ນທຸກຍາກຮ້າຍຜູ້ດຽວຕະເດີນຄ່ອງຂໍກິນ ແລ້ວແລມາຢູ່ຊື່ນກ້ອງຕະລ່າງເຮືອນຂອງຜູ້ອື່ນ ຍັງມີເສດຖີເຖົ້າຜູ້ ໑ ເປັນສະຫາຍພໍ່ມັນແຕ່ກ່ອນພົ້ນເຫັນມັນເປັນທຸກນາກຈຶ່ງກ່າວວ່າ ດູລາ ນາບະອະ ມຶງຍັງຮູ້ຈັກກູຣີ ຮູ້ວ່າບໍ່ຮູ້ນັ້ນຈາ? ລູກເສດຖີນັ້ນອາຍລອດກ່າວວ່າ ບໍ່ຮູ້ຈັກ ທ່ານເສດຖີເລົ່າວ່າມຶງຍັງຄະນຶງຄຳສອນມຶງແດ່ຣື ມັນກ່າວວ່າຂ້າບໍ່ຄະນຶງ ເຖິງຈຶ່ງເປັນສັບປີດາຍ. ທ່ານເສດຖີກ່າວວ່າ ມຶງບໍ່ຟັງຄຳຜູ້ເຖົ້າຜູ້ແກ່ດັ່ງນັ້ນມຶງຈຶ່ງຈົບຫາຍອາຍອອດເຖິງທຸກເພື່ອດັ່ງນັ້ນ ພີວ່າຍັງຈັກຟັງຄຳກູແທ້ ກູຈັກໃຫ້ມຶງໄດ້ເຊິ່ງຄວາມສຸກເລົ່າຍັງຈັກເພິ່ງໃຈມຶງຣື? ລູກເສດຖີຜູ້ນັ້ນຂານວ່າເຈົ້າກູຍັງອີດູຈັກໃຫ້ຂ້ານີຄວາມສຸຂສວັສດີແທ້ດັ່ງນັ້ນ ຂ້າກໍຈັກຟັງຄຳຈື່ໄວ້ໃນໃຈກະທຳອັນໃດຕາມຄຳສອນທ່ານຊູອັນ ທ່ານເສດຖີເຖົ້າຈຶ່ງເອົາມັນຢູ່ເຮືອນນຳແລ້ວຄອຍສອນສາຕສິນໃຫ້ແກ່ມັນເພາະໄດ້ຮັກກັນກັບພໍ່ມັນມາແຕ່ກ່ອນນັ້ນ ລູກເສດຖີກໍຕັ້ງຢູ່ໃນຄຳສອນພໍ່ສະຫາຍຂອງຕົນເລີຍ

ເປັນຄົນຮູ້ທຳການງານຊູ່ອັນ ແລະສລາດເຮັດອັນໃດໃຫ້ເປັນທີ່ເພິງໃຈ
ແກ່ຄົນທັງຫຼາຍໄດ້ ເສດຖີເຫັນນັ້ນເປັນຊ່າງປະຈິດດີ ຈຶ່ງໃຫ້ນັ້ນແປງ
ດອກໄມ້ຄຳງາມນັກ ແລ້ວເອົາເມືອຖວາຍແກ່ພຍາ ພຍາກໍຄະນຶງວ່າ
ດອກໄມ້ຄຳນີ້ງາມນັກໜາ ເປັນທີ່ເພິງໃຈ ຈຶ່ງເອົາໃຫ້ແກ່ລູກສາວຕົນ ລູກ
ສາວພຍາໄດ້ເຫັນກໍມີຄວາມຍິນດີ ຈຶ່ງອຸບາຍຖາມວ່າ ຂ້າແກ່ມະຫາ
ຣາຊເຈົ້າໆກູໃຫ້ດອກໄມ້ຄຳອັນນີ້ເປັນທີ່ເພິງໃຈແກ່ຂ້ານ້ອຍ ແມ່ນຜູ້ໃດ
ກະທຳນີ້ຈານໍ? ຂ້ານ້ອຍຢາກໃຫ້ແປງເປັນຄູ່ຄອນດີແທ້ ພຍາຕົນພໍ່ວ່າບໍ່
ແມ່ນຊ່າງຄຳເອົາແປງ ທ່ານເສດຖີໄປໄດ້ຫາໃນນາບໍ່ຮູ້ ລູກສາວພຍາ
ໄດ້ຍິນຄຳພໍ່ຕົນດັ່ງນັ້ນ ກໍຍັງເກີດຄຳຮັກໃນລູກເສດຖີຜູ້ນັ້ນ ຈຶ່ງກະທຳອຸ
ບາຍຄົບເຄີຍກັບທ່ານເສດຖີຜູ້ເປັນພໍ່ ກໍຕິປອງແຕ່ງໜັງສືມາໂສມລູກເສດ
ຖີດ້ວຍຄຳຮັກວ່າ "ປີຍັງ ນະຍັງ ຍັງຄ່ອງຢູ່ສວັສດີຂອນອຸ່ນໃຈ ຈຶ່ງຫາ
ສລະພີ່ເວົ້າຂໍວອນຕາຍາງດີໂດຍແມ່ນາແມ່ວ່າຈັກລອບລ່ອງເຂົ້າເຂດພຸ້ນລື
ເປັນ" ລູກເສດຖີກໍມີໜັງສືໄປຕອບວ່າ " ຮຽນຮັກເຈົ້າຈິດສ່ອງໃສຜາຍ
ຕາບໄປເຖິງຕົນຕາຍຈຶ່ງແລ້ວ ຊາດລຸນເລົ່າຂີນຂວາຍນຶງແມ່ນແອຂໍອອນ
ຄຳຄຽນຄາດແກ້ວກຶ່ງໂສມແສນ" ເມື່ອຂາເຈົ້າທັງສອງສົ່ງສານບັນນາ
ຮັກແພງ ໃຝ່ມາຫາກັນແຕ່ນັ້ນບໍ່ນານເທົ່າໃດ ລູກສາວພຍາລອດເປັງເກີດ
ພຍາດ ເຫດຢາກເຫັນໜ້າຜູ້ຊາຍ ກໍບໍ່ໄດ້ເຫັນສັກເທື່ອ ພຍາຮູ້ຂ່າວວ່າ
ລູກຕົນເປັນພຍາດຮ້າຍກໍຮ້ອນໃຈ ຈຶ່ງໃຫ້ໝໍທັງຫຼາຍພາຍໃນຣາຊວັງໄປ-
ຢາກໍບໍ່ຫາຍ ແຮງເກີດພຍາດຍິ່ງກ່ວາເກົ່າ ພຍາຮ້ອນໃຈຫຼາຍຢ້ານລູກ
ຕົນຕາຍ ຈຶ່ງໃຫ້ຕີກອງບອກຂ່າວ ຜູ້ໃດຢາລູກກູໃຫ້ຫາຍພຍາດ ກູຈັກໃຫ້

ລູກກູກັບທັງເມືອງແກ່ມັນເຄິ່ງນຶ່ງ ວ່າດັ່ງນັ້ນ ນາງໄດ້ຍິນຄໍາອັນນັ້ນກໍຍິນ
ດີ ຈິ່ງໃຊ້ໃຫ້ສັນຍາແກ່ລູກເສດຖີວ່າ ທີ່ມີຄໍາປາຖນາແຫ່ງຮາທັງສອງຈັກ
ບໍ່ຣະບອນແລ້ວ ໃຫ້ເຈົ້າມີຫວ້ານຢາອັນໃດອັນນຶ່ງພໍເປັນຕົວຢ່າງແລ້ວ ກໍ
ກະທໍາເປັນໝໍນາຢາຂ້າເຖີ້ນ. ລູກເສດຖີໄດ້ຮູ້ສໍາຄັນສັນຍາຂອງລູກສາວ
ພຍາດັ່ງນັ້ນ ມັນຈິ່ງກ່າວຊຶ່ງທ່ານເສດຖີຜູ້ພໍ່ວ່າດັ່ງນີ້ ອັນລູກສາວພຍາ
ເປັນພຍາດນັ້ນໃຫ້ຂ້າໄປຢາຫາຍກໍຂ້າແລ ພໍ່ຈິ່ງໄປບອກແກ່ພຍາເຈົ້າ
ເຖີ້ນ. ເສດຖີກໍເອົາຄວາມລູກລ້ຽງແຫ່ງຕົນນັ້ນໄປທູນ ແກ່ພຍາເຈົ້າວ່າ
ເທອະຂ້າໃຫ້ມະຫາຣາຊເປັນເຈົ້າ ລູກຂ້າພະຍາດນີ້ຮູ້ທຸກອັນແທ້ ພຍາ
ໄດ້ຍິນຄໍາເສດຖີກໍມີຄວາມຍິນດີຍິ່ງ ຈິ່ງກ່າວວ່າ ຜີວ່າມັນຢາລູກກູຫາຍ
ແທ້ ກູຈັກໃຫ້ກິນເມືອງເຄິ່ງນຶ່ງ. ລູກເສດຖີກໍເຂົ້າໄປສູ່ຫ້ອງຫໍນອນແຫ່ງ
ລູກສາວພຍານັ້ນ ຄັນວ່າຂາທັງສອງໄດ້ເຫັນກັນແລ້ວ ກໍບັງເກີດຄວາມ
ຮັກ ທຸກຮ້ອນໃນຕົນຕົວ ກໍຫາຍສຽງເສັງໄປໝົດແກ່ນາງນັ້ນ ພຍາຮູ້ຂ່າວ
ວ່າລູກສາວຂອງຕົນຫາຍພຍາດແລ້ວ ລວດຍິນດີຍິ່ງ ຈິ່ງຖາມລູກສາວວ່າ
ດູລາລູກຮັກພໍ່ສອນລູກເສດຖີຜູ້ນີປົວເຈົ້າຫາຍພຍາດແລ້ວ ກູພໍ່ວ່າຈັກໃຫ້
ເປັນຜົວມຶງ ນາງຍັງຈະເພິງໃຈລືຮູ້ວ່າບໍ່ເພິງໃຈນັ້ນຈາ? ລູກສາວໄດ້
ຍິນຄໍາພໍ່ກ່າວດັ່ງນັ້ນ ຈິ່ງຂານວ່າ ຂ້າແກ່ມະຫາຣາຊເຈົ້າ ຕົນຕົວລູກນີ້
ຫາກເກີດມາແທບຕີນມະຫາຣາຊເຈົ້າດາຍ ເຈົ້າພຍາໄດ້ຍິນຄໍາລູກສາວ
ຂອງຕົນແລ້ວກໍມີໃຈຊົມຊື່ນຍິນດີ ຈິ່ງໃຫ້ສຽງສາທຸການແກ່ສຸພະທະມາ
ນະວະ ມ ທີແລ້ວ ກໍໃຫ້ຕໍາແໜ່ງທີ່ອັນເປັນເສນາແກ່ສຸພະທະມານະວະ
ນັ້ນ.

ຕັ້ງແຮກແຕ່ນັ້ນໄປພາຍໜ້າ ສຸພະທະມະຫາເສນາແຕ່ງແປງຮັບຮອງຣາຊການບ້ານເມືອງທັງມວນບໍ່ໃຫ້ເຄືອງໃຈພຍາສັກອັນ ຄົນຜູ້ໃດຄວນເອົາເປັນເສນາພາຍນອກ ກໍຕັ້ງໄວ້ໃຫ້ເອົາການພາຍນອກ ຜູ້ໃດຄວນເອົາການພາຍໃນ ກໍຕັ້ງໃຫ້ເອົາການພາຍໃນ. ຄົນຜູ້ໃດຄວນແຫ່ແຫນຮັກສານາງສາວຊາວແມ່ລູກເມັ້ຽພຍານັ້ນ ກໍແຕ່ງໃຫ້ເຂົ້າໃນຣາຊວັງພາຍໃນນັ້ນ ໃຫ້ເຂົາຢູ່ຮັກສາປາສາດຣາຊຖານແຕ່ງພຍາ, ຄົນຜູ້ໃດຄວນໃຊ້ສອຍຕີນມື ໝັ້ຽງໝາກເຄື່ອງໄລ້ລາທາຈອງຈັນມັນຫອມກໍແຕ່ງໃຫ້ຖືນອມຄັດເປັນຂາວອະນຸຂັນຕາມໃຊ້ພຍາ, ຄົນຜູ້ໃດຄວນຮັກສາພຍາ, ຮັກສາເຫຼັ້ນສາງສິນບັດ, ຊ້າງ, ມ້າ, ເສື່ອສາດ ກໍໃຫ້ເຂົາຮັກສາຕາມຄຸນອັນເຂົາຮູ້. ຄົນຜູ້ໃດສລາດຮູ້ກະທຳຄົວປົວແປງແລງງາຍໃຫ້ທ້າວພຍາສເວີຍ ກໍໃຫ້ເຂົາໄປກະທຳການຄົວແຕ່ງແລງງາຍ, ຄົນຜູ້ໃດເປັນນັກປາດອັນສລາດຮູ້ສື່ສານການເມືອງ ອັນມາແຕ່ຕ່າງປະເທດກໍດີ ສຸພະທະມະຫາອານາດກໍພິຈາຣະນາດູດ້ວຍພຍາຕົນແລ້ວ ກໍຕັ້ງເຂົາໄວ້ໃຫ້ຮັບຣາຊການພຍາເຈົ້າແຕ່ງຕົນນັ້ນ.

ດັ່ງນັ້ນມະຫາເສນາບໍດີ ກໍແຕ່ງໃຫ້ທ້າວພຍາຈັດແຕ່ງທານະອັດໃຫ້ທານແກ່ສະມະນະພາມຍາຈົກວະນິພົກ ຄົນຂໍທັງຫຼາຍຊູ່ວັນບໍ່ຂາດ ມະຫາເສນາບໍດີມີໃຈອັນກວ້າງຂວາງ ຍ່ອມພິຈາຣະນາຫາອັນຈັກເປັນປໂຍດຈຳເຣີນສີສິນບັດແກ່ຂັນທະສີມາບ້ານເມືອງພຍາເຈົ້າຕົນນັ້ນທຸກເມື່ອ ສ່ວນສຸພະທະມະຫາເສນາກະທຳອຸປຖາກຮັກສາຈັກກະວັດຕິຣາດ ດ້ວຍໂຄຣົບຢຳແຢງໃຫ້ມີອານຸພາບຮຸ່ງເຮືອງດັ່ງນັ້ນ ກໍມີກິດຕີສັບລືຊາປາກົດໄປທົ່ວສະ

ກິນຊຸມພຸພືບທັງມວນ ທ້າວພຍາສາມັນຕະຣາດ ກໍຍິນດີເປັນໄມ້ຕີຕິດດ່
ນິສເນຫາຮັກແພງກັນ ກໍຢູ່ສເວີຍຣາຊສົມບັດຮຸ່ງເຮືອງໃນເມືອງບູຣີ
ຣາຊທານີດັ່ງນີ້.

ສິທະມຸຂີກ່າວແກ່ຜີທັງຫຼາຍວ່າ ຜູ້ໃດຟັງຄຳສອນບັກປາດແລະ
ສລາດຮູ້ປະຕິບັດຕາມດັ່ງນັ້ນ ກໍອາດຈັກໃຫ້ແລ້ວຄວາມສຳຣິດທິສວັສດີແກ່
ຜູ້ນັ້ນ ເປັນດັ່ງສຸພະທະນະທາເສນານັ້ນ. ອັນນຶ່ງເປັນດັ່ງຜີໂຕຊື່ວ່າ ຕິສຸ
ທະຣະ ອັນນາງສາກຸນີຫາກຂັບໜີໄປນັ້ນ

ຜີທັງຫຼາຍຖາມ ເຣື່ອງເປັນຢ່າງໃດ?

ສິທະມຸຂີ ເລົ່ານິຍາຍ

ນິທານທີ ໔

ເຣື່ອງຕິສຸທະຣະ

ໃນເມື່ອກ່ອນພຸ້ນ ມີເມືອງນຶ່ງຊື່ທັກຂະນະມະທຸຣະ ມີພຍາຕົນ ໑
ຊື່ວ່າ ສຸວັນນະສູນທະຣະມັນທະຣາດ ໃຫ້ສ້າງປາສາດຫຼັງ ໑ ບໍ່ທັນຂຶ້ນຢູ່
ມີຜີໂຕ ໑ ຊື່ວ່າ ຕິສຸທະຣະ ເຫັນປາສາດເປົ່າມັນຈຶ່ງເຂົ້າເມືອຢູ່ ຄັນ
ເຫັນຄົນຜູ້ງມາຢູ່ເຝົ້າປາສາດນັ້ນ ມັນຫຼອກເຂົາບໍ່ໃຫ້ນອນໄດ້ ພຍາຮູ້
ຂ່າວວ່າມີຜີຫຼອກຢູ່ໃນປາສາດນັ້ນ ຈຶ່ງກ່າວແກ່ມຸນຕີວ່າ ທ່ານຈົ່ງຫາຄົນຜູ້
ຮູ້ສາດສິນມາຂັບຜີໜີຈາກປາສາດຫຼັງນີ້ເຖີ້ນ ຜີທ່ານບໍ່ຂັບໜີໄດ້ ກູບໍ່ໄວ້ຊີ
ວິດແຫ່ງທ່ານ ມຸນຕີໄດ້ຟັງອາຄຍາແຫ່ງພຍາບອກແຈ້ງແກ່ຕົນ ກໍຮີບຮ້ອນ
ມາສູ່ເຮືອນ ພິຈາຣະນາຫາໝໍມົນຜູ້ຮູ້ຂັບຜີໜີນັ້ນບໍ່ໄດ້ ລວດບໍ່ກິນເຂົ້ານ້ຳ
ໂພຊນະອາຫານ ບໍ່ປາກຈາຣະຈາທີ່ຢູ່ພ້ອມຕອມມາກ. ນາງສາກຸນີຜູ້

ເປັນລູກສາວກໍຖາມພໍ່ຂອງຕົນດູ ຮູ້ເຫດອັນນັ້ນແຈ້ງດີແລ້ວ ກໍຄຶດໃນໃຈວ່າ "ບັດນີ້ກູຈັກບົງທຸກພໍ່ຕົນອັນໃຫຍ່ໃຫ້ຫາຍ" ຈຶ່ງຖວາຍຄຳກ່າວວ່າພໍ່ເປັນເຈົ້າຢ່າໂສກເສົ້າໝອງໃຈ ຂ້າຈັກຂັບຜີໃຫ້ໜີຈາກສາລາເພຍາເຈົ້າ ຄັນວ່ານາງກ່າວແລ້ວຮີບຫວີຫົວປະດັບຕົນຕົວດີແລ້ວກໍເອົາເຄື່ອງນາງສອງອັນພ້ອມໝໍ້ນ້ຳອັນ ໑ ເຂົ້າໄປສູ່ສາລາອັນນັ້ນ. ຜີໂຕນັ້ນເຫັນວ່ານາງງາມກໍມີໃຈປະຕິພັດໄຄ່ໄດ້ນາງເປັນເມັຍ ຈຶ່ງເຂົ້າໄປຖາມວ່າ ດູລາ ນາງນີ້ມີຊື່ດັ່ງລື ມານອນຢູ່ໃນທີ່ນີ້ຈາ? ນາງກ່າວວ່າ ກູຊື່ສາກຸນີມາຢູ່ຮັກສາອັດຕະກາທິເທວະດາເຈົ້າກູຈຶ່ງເຂົ້າມາທີ່ນີ້ເພື່ອອັນດາຍ ຜີໂຕຊື່ດິສຸທະຂະກ່າວວ່າ ກູເປັນໃຫຍ່ເປັນເຈົ້າໃນສາລາທີ່ນີ້ ທໍ່ວ່າກູຫາເມັຍບໍ່ໄດ້ມຶງຍັງນັກໄຄ່ຢູ່ເປັນເມັຍກູບໍ່? ກູຈັກເອົາມຶງເປັນເມັຍ ນາງກ່າວວ່າມຶງມີໃຈກັດຕິກັບກູແທ້ ຄັນວ່າເຂົ້າຂອງສິນບັດຂອງມຶງອັນໃດເພິ່ງໃຈກູໆຈັກເອົາ ມຶງຍັງຈັກໃຫ້ໄດ້ບໍ່ ຜີກ່າວວ່າເຂົ້າຂອງກູມີບໍ່ໃຊ້ ແນນທີ່ຮາໄດ້ຢູ່ກິນນຳກັນເປັນຜົວເມັຍກັນ ນາງກ່າວວ່າມຶງຫານຸກແກ້ວຕົນງາມເຕັມແຄງ ໑, ຫາເພັດລ່ຽມສ່ຽມສເມີກັນເຕັມແຄ່ງ ໑, ຫາຄຳແດງດີຂນາດເຕັມພ້ອມພຳມາເປັນຂອງຂວັນອັນຮາຈັກຢູ່ດອມກັນສ້າງຢາວກະທຳເຮືອນ ໄປພາຍໜ້າພຸ້ນເຕີ້ນ. ຜີກ່າວວ່າ ເອີ! ຄຳບູຮານປາງປູ່ກ່າວວ່າ "ຕິດແກ້ເພື່ອນເສັງ ເອົາເມັຍໄດ້ດ້ວຍເຊື່ອດາຍ" ເຫດດັ່ງນັ້ນຮາໄດ້ເປັນຜົວເມັຍກັນກ່ອນແລ້ວ ກູຫາກຈັກຫາຂອງຝູງນັ້ນມາໃຫ້ແກ່ນາງເມື່ອລຸນ ນາງຮູ້ວ່າຜີນັ້ນຈັກຕົວະລ່າຍແທ້ ມັນຈັກໃຫ້ແພ້ຜີຈຶ່ງກ່າວແກ່ອັດຕະກາທິເທວະດາເປັນສັກຂີພິຍານໃຫ້ຮູ້ຈື່ຈຳຄຳປະຈັກຊູ່ອັນ ຈຶ່ງໃຫ້ຜີນັ້ນຢູ່ດ້ວຍໃນຄືນນັ້ນ ມື້ລຸນ

ມາກໍຈໍາຜີຫາຂອງຂວັນມາໃຫ້ມັນບໍ່ໄດ້ສັກສິ່ງ ນາງຈຶ່ງກຸມຜູກຕີນມືຜີນັ້ນໄວ້ ຜີກໍຮ້ອງໄຫ້ຄາງວ່າ ເຈົ້ານາງສາກຸນີຄວາມສວັສດີຈົ່ງມີແກ່ເຈົ້າ ຂໍປ່ອຍຂ້າໆ ທີ່ຈັກໄປຄວ່າຫາເຂົ້າຂອງຝູງນັ້ນມາໃຫ້ເຈົ້າ. ນາງສາກຸນີກ່າວແກ່ອັດຕະກາທິເທວະດາເປັນສັກຂີໃຫ້ຮູ້ແຈ້ງຈຶ່ງປ່ອຍຜີໜີໄປໃຫ້ຕົກໄກຕ່າງປະເທດພຸ້ນ. ນຸບຕີຮູ້ວ່າລູກສາວຕົນຂັບຜີໜີແລ້ວ ຈຶ່ງປະດັບປະດາຜາສາດນັ້ນໃຫ້ດີ ກໍເມືອໄຫວ້ພະຍາບອກຂ່າວໃຫ້ຮູ້ຊູ່ອັນ ພະຍາສຸວັນນະສຸນທະຣະມັນທະຣາດ ກໍຂຶ້ນສູ່ຜາສາດແລ້ວມີຄວາມຍິນດີຈຶ່ງໃຫ້ຂອງຮາງວັນອັນມາກແກ່ມຸນຕີ ກັບນາງສາກຸນີ ໃຫ້ຢູ່ສຸກສວັສດີແອນຍິ່ງ.

ສ່ວນຜີໜີຈາກຜາສາດທີ່ນັ້ນແລ້ວ ບໍ່ຫຼຽວຄືນ ເລົ່າເຂົ້າໄປສູ່ເມືອງປາຕະລີບຸດຂຶ້ນນອນໃນຜາສາດໃໝ່ທີ່ນັ້ນ ພະຍາປາຕະລີບຸດຮູ້ຂ່າວວ່າ ພະຍາສຸວັນນະສຸນທະຣະມັນທະຣາດອາດຈັກຂັບຜີໜີໄດ້ກໍຈຶ່ງໃຫ້ແຕ່ງຂອງຝາກບັນນາການ ກັບທັງຊ້າງ, ມ້າມາຖວາຍພະຍາສຸວັນນະສຸນທະຣະມັນທະຣາດເພື່ອຂໍເອົານາງສາກຸນີເມືອຂັບຜີໜີ ນາງກໍເມືອກັບດ້ວຍຍົດສັກບໍຣິວານອົງອາດ ຜີຢູ່ໃນຜາສາດບໍ່ໄດ້ກໍລອດລົງມາໄຫວ້ນົບໂຄຣົບຢຳແຢງ ແກ່ນາງສາກຸນີຈຶ່ງກ່າວໂສກອັນນີ້ ວ່າ :

ຂ້າແກ່ເຈົ້ານາງສາກຸນີ ອັນວ່າຄວາມນ້ອມໄຫວ້ແຫ່ງຂ້າແລະຄວາມສວັສດີ ກໍຈົ່ງມີແກ່ເຈົ້າອັນວ່າຕົນນາງນີ້ເຂົ້າມາສູ່ເມືອງປາຕະລີບຸດ ດ້ວຍເຫດສັນໃດ? ຮອຍວ່າຈັກມາຂັບຂ້າໜີ ແຕ່ນີ້ເມືອໜ້າຢ່າຍາກກໍໃຈນາງຂ້າຫາກຈັກຈາກຜາສາດແລ້ວແລໜີໄປໃນໄພຂວາງປ່າກວ້າງອັນເປັນທີ່ຢູ່ແຫ່ງໝູ່ເນື້ອແລະນົກທັງຫຼາຍພຸ້ນ.

ຮີໂຕຊື່ ຕິສຸທະຣະ ກ່າວທີ່ນັ້ນແລ້ວມັນຢ້ານນາງສາກຸນີຜູ້ປັນຕີ ມັນເລົ່າຮີບໜີເຂົ້າໄປສູ່ປ່າໃຫຍ່ດົງຫຼວງພຸ້ນ. ພຍາກໍຂຶ້ນສູ່ຫາສາດສເວີຍອາຊສິນບັດຊອບທຳ ກໍໃຫ້ລາງວັນແກ່ນາງສາກຸນີເປັນອັນມາກ ແລ້ວກໍໃຫ້ສົ່ງນາງສາກຸນີເມືອດ້ວຍສວັສດີ. ຮີໂຕນຶ່ງຊື່ວ່າ ຕຸອັງຄະນາສີ ກ່າວວ່າມາເຮົາເອົາອຸທະຕຸອັງຄະນາສີຜູ້ເຖົ້ານີ້ເປັນພຍາແກ່ເຮົາເຖີດ . ຮີໂຕ ໑ ຊື່ວ່າອັດຊະນາສີຫ້າມວ່າ ບໍ່ດີມັນເຖົ້າແກ່ຊະຣາການຍ່ອມຫຼົງຖ້ອຍຫຼົງຄວາມ ຄືດອັນໃດຍ່ອມລືມເສັຽ ລາງຄົນຍ່ອມຕາຍຊ້ຳ ເປັນດັ່ງຂ້າເຖົ້າເມັຽຕີຕາຍນັ້ນ. ຮີຫົງຫຼາຍຖາມ ເລື່ອງເປັນຢ່າງໃດ? ອັດຊະນາສີເລົ່ານິຍາຍ :

## ນິທານທີ ໕

## ເລື່ອງຂ້າເຖົ້າເມັຽຕີຕາຍ.

ໃນກາລະເມື່ອກ່ອນ ມີນະຄອນ ໑ ຊື່ວ່າ ໂກສະລະວິສັຍ ຍັງມີລູກກະກຸນຜູ້ ໑ ຊື່ວ່າ ທັມມະກຸດຕະເປ ເດີນໄປຕ່າງປະເທດຄືນມາເມື່ອເວລາມີອາຍຸໄດ້ ໗໐ ປີນີໄສຄົນເຖົ້າແກ່ຊະຣາ ຍັງເລົ່າມັກໜຸ່ມນ້ອຍມາເປັນເມັຽ. ທັມມະດາຍິງໜຸ່ມນ້ອຍຍ່ອມມັກໂລບການຄຸນ ເຫັນຜົວເຖົ້າເຮັດຕາມໃຈບໍ່ໄດ້ ຈິ່ງບອກຄວາມໃຫ້ຊາຍຊູ້ຫຼອນຂ້າຜົວເມື່ອກາງຄືນ ແລ້ວກໍເອົາເຂົ້າຂອງອັນດີຕາມປະສົງໜີໄປນຳຊູ້ ເມື່ອຂາໄດ້ພາກັນໄປເຖິງແມ່ນ້ຳໃຫຍ່ແມ່ ໑ ຂາກໍຂີນຂວາຍແຕ່ງແພລອຍໄປສູ່ເກາະກາງນ້ຳ ແລ້ວຊາຍຊູ້ມັນຄະນຶງວ່າຍິງຜູ້ນີ້ໃຈບາບຍິ່ງໜັກໜາ ມັນຈຳໃຫ້ກູຂ້າຜົວມັນຕາຍແລ້ວແລະໜີມານຳກູດັ່ງນີ້. ຕໍ່ໄປພາຍໜ້າມັນຈັກຂ້າກູເສັຽບໍ່ຮູ້ ນາງກູເອົາ

ເຂົ້າຂອງຝູງນີ້ໜີໄປປະມັນເສັ້ຽເຖິ້ນ ຊາຍຊູ້ຄະນຶງດັ່ງນັ້ນແລ້ວ ກໍເອົາ
ເຂົ້າຂອງເຊື່ອງກອງແຜໄວ້ແລ້ວ ມັນກໍປະໜີໄປ. ຍິງຮ້າຍຜູ້ນັ້ນກໍຮ້ອງ
ໄຫ້ກິ້ງເກືອກເປັນບ້າມີລີ້ນເສື້ອເຂັ້ຽເຄັ້ຽເສັ້ຽໝົດ ແລ່ນໄປມາຫາທີ່ຈັກ
ລອຍນ້ຳໄປກໍບໍ່ໄດ້ ເທວະດາຝູງຢູ່ໃນເກາະນັ້ນ ກໍນິຣະມິດໃຫ້ເປັນໝາ
ຈິກຈອກຕົວ ໑ ຄາບຕ່ອນຊີ້ນມາຜາກິດຊອງໜ້າ ມັນເຫັນໝາຄາບຕ່ອນ
ຊີ້ນມາແລ້ວ ຊ້ຳເລົ່າເຫັນປາຕົວ ໑ ເຕັ້ນອອກມາດອນຊາຍຫັ້ນມັນຈັກ
ເອົາປາເສັ້ຽດາຍຕ່ອນຊີ້ນ ຈັກເອົາຕ່ອນຊີ້ນຊ້ຳເລົ່າເສັ້ຽດາຍປາ ມັນກໍ
ພະເວີພະວາງປົບໄປມາວ່າຈັກເອົາຕ່ອນຊີ້ນ ໝາຈິກຈອກຊ້ຳຄາບເອົາ
ແລ່ນໜີໄປນັ້ນຫົວຂວັນຢູ່ວ່າຈັກປົບໄປຄຸບປາຊ້ຳໂດດໜີລົງນ້ຳ ມັນຊ້ຳເລົ່າ
ໄຫ້ແລ່ນໄປມາ ຍາມນັ້ນຍິງບາບໃບ້ພາລາເຫັນໝາ ຫົວຂວັນອະເຮີຍ!
ເໝືອນດັ່ງຕົວບໍ່ເປັນທຸກສັງສັກສິ່ງ ໝາຈິກຈອກຈຶ່ງບອກໂທດໃຫ້ມັນເຫັນ
ຈຶ່ງກ່າວໂສກອັນນີ້ວ່າ: "ດູລາຍິງຜູ້ພອຍຮ້າຍ ມຶງເຫັນຍັງໂທດແຫ່ງກູ
ອັນນ້ອຍຄືວ່າຊາກຊີ້ນແລະປາ ກູສແວງຫາໃໝ່ຍັງຈັກໄດ້ເລົ່າດາຍ, ມຶງ
ບໍ່ເຫັນຍັງໂທດແຫ່ງຕົນຕົວມຶງມາກກ່ວາພູເຂົາດີຫຼີດາຍ, ມຶງລະເສັ້ຽຍັງ
ປໂຍດທັງມວນ ຄືວ່າຍ້າວເຮືອນທີ່ຢູ່ທີ່ນອນເສັ້ຽໝົດ ຄືວ່າປາສຈາກທັງ
ຜົວເຖົ້າມຶງເຂົ້າມາຫຼົງຕາຍດັບອາຍໃນກາງແມ່ນ້ຳສັນນີ້ ບາບກັມມຶງມີ
ມາກ ບໍ່ຄຶດກົວລືຈັກຫົວຂວັນກູເຫດສັນໃດນັ້ນຈາ"?

ເຫດນັ້ນຝູງນັກປາດຕິນສລາດຮູ້ຄອງໂລກ ຈຶ່ງກ່າວໂສກອັນນີ້ໄວ້
ສນອງຄວາມວ່າ:

"ຍິງໃດບໍ່ມັກສ້າງສິນເຮືອນ ໃຈວິ່ງວອນເປັນໂລບລ້ຽວລີ້ນແລະຊູ້

ຊົນ ເໝືອນພັດສິ່ງຂອງແລເຄື່ອງທຸກອັນອງບກັງອເກືອກກົ້ງດິນຕາຍ"

ພີທັງຫຼາຍໄດ້ຍິນນິຍາຍອັນນັ້ນ ລອດບໍ່ເອົາອຸດທະຕຸອັງຄະນາສີຜູ້ເຖົ້ານັ້ນເປັນພຍາແກ່ເຂົາ. ຄັດນັ້ນພີໂຕ ໑ ຊື່ວ່າຫັດຖີກັນທະລີ ກ່າວວ່າດັ່ງນີ້ ນາເຮົາເອົາທີຄະໂຮຄີ ຜູ້ເປັນພຍາດບໍ່ອາດຄ່ອງໄປມາໄດ້ຮັເປັນພຍາແກ່ເຮົາເຖີ້ນ ພີໂຕ ໑ ຊື່ວ່າ ທີຄະເທສີ ຫ້າມເສັງວ່າບໍ່ດີ ຜູ້ເປັນພຍາດນັກໜານີ້ບໍ່ອາດໃຫ້ແລ້ວຣາຊກິດໄດ້ສັກອັນ ແມ່ນວ່າເປັນພຍາແລ້ວແລະເກີດເປັນພຍາດໜັກໜານັ້ນ ທ່ານກໍຍັງຂັບໜີຈາກຣາຊການບ້ານເມືອງ ເປັນດັ່ງພຍາດິນ ໑ ງູເຂົ້າໃນທ້ອງລຳບາກຍາກໃຈນັກ ຊາວເມືອງທັງຫຼາຍຈຶ່ງຂັບໜີໄປຢູ່ໃນປ່າກວ້າງດົງໃຫຍ່ພຸ້ນ. ພີທັງຫຼາຍຖາມວ່າເຣື່ອງເປັນຢ່າງໃດ? ທີຄະເທສີ ເລົ່ານິຍາຍະ

ນິທານທີ ໒

<u>ເຣື່ອງພຍາສຸນທະຣາດ</u>

ໃນກາລະເມື່ອກ່ອນ ຍັງມີເມືອງ ໑ ຊື່ວ່າ ພະໂພດຊະແລບຸຣີ ແລະມີພຍາດິນ ໑ ຊື່ວ່າ ສຸນທະຣາດ ສເວີຍຣາຊສົມບັດຢູ່ໃນເມືອງນັ້ນ ພຍາດິນນັ້ນດູດກິນນ້ຳໄດ້ກືນກິນງູນ້ອຍໂຕ ໑ ເຂົ້າໄປນຳນ້ຳ ງູໂຕນັ້ນກໍໃຫຍ່ມາໃນທ້ອງພຍາ ແລ້ວທ້ອງພຍາກໍໃຄ່ຂຶ້ນທັງ ໔ ຂ້າງ ເປັນດັ່ງນານຮຸງລຳບາກຍິ່ງນັກ ຫາໝໍຢາມາຢາກໍບໍ່ຫາຍ ໄພ່ຟ້າຂ້ານຸບຕີ ອາມາດເຂົາກໍປົດຍັງທ້າວສຸນທະຣາດນັ້ນໃຫ້ຢູ່ເປົ່າດາຍ ແລ້ວເຂົາກໍເອົານ້ອງພຍາສເວີຍຣາດແທນ. ທ້າວສຸນທະຣາດກໍອາຍແກ່ໄພ່ພົນ ຢູ່ໃນເມືອງບໍ່ໄດ້ກໍເອົາເມັຽລັກໜີເຂົ້າໄປໃນປ່າ ຕະເດີນໄປຄ່ອງຫາລູກໄມ້ ແລະຫົວ

24/VII
ຫາມຈຳໜ່າຍ

ມັນ.

ຍັງມີອັນນຶ່ງ ກາງຄືນທ່ານນອນຫຼັບ ເໜືອຕັກນາງມະເຫສີເທວີມີຈຸມ
ປອກຢູ່ໃກ້ເຄົ້າໄມ້ທີ່ນັ້ນ ງູຕົວຢູ່ໃນທ້ອງພຍານັ້ນກໍຍື່ນຫົວອອກມາ ພົ້ນປາກ
ແຫ່ງພຍາແລ້ວ ມັນກໍຍົກຫົວເພີ່ນຄໍຍໍຫົວແກວ່ງໄປມາ ມີງູຕົວ ໑ ຢູ່ໃນຈຸ່ມ
ປອກນັ້ນ ມັນກໍອອກມາກາງກັ້ງເພີ່ນຄໍຢູ່ຫຼັ້ນ ມັນເຫັນງູຕົວຢູ່ໃນທ້ອງພຍາກໍ
ຮຽກວ່າສະຫາຍ ມຶງຈົ່ງອອກມາ ຮາຈັກພາກັນໄປຄວ່າກິນອາຫານພາຍນີ້
ມີສຸກສຳຣານ ມຶງຢ່າອິດຢູ່ໃນທ້ອງພຍາເຖີ້ນ ພຍາຫາໃຈຍາກ. ງູຕົວຢູ່
ທ້ອງພຍາຂານວ່າ ກູເຄີຍຢູ່ສຳຣານໃນທ້ອງພຍາຫາກິນບໍ່ຍາກສັ້ງ ກູບໍ່ໄປ
ຄວ່າກິນນອກດັ່ງມຶງນັ້ນໄດ້. ງູຕົວຢູ່ໃນຈຸມປອກນັ້ນກ່າວວ່າ ພີມຶງບໍ່ຟັງຄຳ
ກູ ຄັນພຍາຮູ້ຈັກເອົາຢາຕົ້ນຢູ່ເໜືອຈຸມປອກນັ້ນ ມາຍີໃສ່ໃນດັ່ງ ກັບທັ້ງກິນ
ແດ່ ມຶງຈັກຕາຍເນົ່າໃນທ້ອງພຍາໄຫຼອອກມາທາງທວານໜັກ ງູຕົວຢູ່ໃນ
ທ້ອງພຍາກ່າວວ່າ ໃນກາລະຊາດກ່ອນນັ້ນ ມຶງເປັນພໍ່ຄ້າກະທຳການຄ້າ
ຂາຍດ້ວຍຊອບ ມີເຂົ້າຂອງເປັນອັນມາກ ມຶງເອົາມາຝັງໄວ້ທີ່ຈຸມປອກຫັ້ນ
ມຶງບໍ່ໃຫ້ທານ ມຶງຕາຍມີໃຈປະຕິພັດກັບເຂົ້າຂອງຈຶ່ງໄດ້ເກີດເປັນງູມາຢູ່ຮູ
ຮັກສາສິນບັດ ຫຼອນວ່າມີຜູ້ຮູ້ມາຂ້າມຶງຕາຍ ເອົາສິນບັດໄປແລ້ວ ກໍແພ້ຂາ
ເສິກສັດຕູຊູ່ແຫ່ງ. ຍາມນັ້ນນາງພຍາໄດ້ຍິນກໍໄປເອົາຕົ້ນຢານັ້ນ ມາຂ້າງູ
ຕົວຢູ່ໃນທ້ອງພຍານັ້ນຕາຍ ພຍາກໍຫາຍພຍາດດີດັ່ງເກົ່າແລ້ວຈຶ່ງເອົານາງ
ຄືນສູ່ພາລາດສເວີຍຣາດເປັນພຍາດັ່ງເກົ່າ ດ້ວຍອັນປະກອບຊອບທັມ ບໍ່
ໃຫ້ນາງແກ້ວທຸກຍາກເປັນຣາຊະເທວີ ຈຶ່ງດອດມຸນຕີຝູງຂັບພຍານັ້ນອອກຕັ້ງ
ຜູ້ໃໝ່ແທນ. ຈຶ່ງເອົາໄພ່ພົນເຂົ້າໄປສູ່ປ່າ ຂ້າງູພິດຕົວຢູ່ຈຸມປອກນັ້ນເສັຽ

ແລ້ວກໍໃຫ້ຊຸດເອົາເຂົ້າຂອງແກ້ວແຫວນແສນສິ່ງອອກມາ ກໍໃຫ້ຕັ້ງມະຫານະຄອນອັນໃຫຍ່ ເປັນເມືອງພຍາຈໍາເຣີນສີສວັສດີ ປະຈົບແພ້ສັດຕູທັງມວນຊູ່ແຫ່ງ ງູທັງ ໔ ເວົ້າຄວາມຈິບຫາຍໃຫ້ແກ່ກັນນັ້ນ ກໍລອດຕາຍພ້ອມກັນທັງ ໔ ດັ່ງນີ້.

ອະນຸພາຄຍະ ກໍຊີ້ເຫດອັນນັ້ນໃຫ້ແຈ້ງຈຶ່ງກ່າວໂສກອັນນີ້ວ່າ: "ຄົນຝູງໃດມີຊາດອັນຖ່ອຍບໍ່ຊອບທັມທ່ຽນຍ່ອມມັກກ່າວຍ້ອງຄໍາອັນຄ່ອນບັງແຫ່ງກັນໄປມາໃຫ້ແຈ້ງແກ່ທ່ານຜູ້ອື່ນ, ຂາທັງສອງນັ້ນກໍເຖິງເຊິ່ງອັນຈິບຫາຍຕາຍໄປ, ເໝືອນດັ່ງງູທັງ ໔ ຕົວຄືຕົວຢູ່ໃນຫ້ອງພຍາແລະຕົວຢູ່ຈຸມປອກນັ້ນ". ເຫດນັ້ນຜູ້ເປັນພຍາດີນີ້ບໍ່ອາດຈັກສເວີຍຄວາມສຸກໄດ້ ແມ່ນເປັນພຍາ ແລ້ວ ເຂົາກໍຍັງຂັບໜີ ຜີທັງຫຼາຍລອດບໍ່ເອົາທີຄະໂຣຄີເປັນພຍາຖັດນັ້ນຜີໂຕ ໑ ຊື່ວ່າກາໂຕສກີຕະຈຶ່ງກ່າວວ່າ: ນາເຮົາເອົາມະຫານຸຂີປີສາດປາກກວ້າງໜ້າໃຫຍ່ຕາຫຼວງນີ້ເປັນພຍາແກ່ເຮົາເຖີ້ນ. ຜີໂຕ ໑ ຊື່ວ່າ ກາໂຕສກີຕີ ກໍຫ້າມເສັຽວ່າບໍ່ດີນາ ມັນນີ້ຖ່ອຍຫາຜຍາບໍ່ໄດ້ ເປັນດັ່ງມຸຂະພານ ຫາຄວາມຮູ້ບໍ່ໄດ້ ແມ່ນມີເຂົ້າຂອງດີວິເສດກໍໃຫ້ອໍອະຫາຍເສັຽ. ຜີທັງຫຼາຍຖາມວ່າ ເລື່ອງເປັນຢ່າງໃດ? ກາໂຕສະກີຕີເລົ່ານິຍາຍ:

## ນິທານທີ ໗

## ເລື່ອງ ມຸຂະພານ

ໃນເມື່ອກ່ອນພຸ້ນ ຍັງມີພຍາຕົນນຶ່ງຊື່ວ່າ ທຸຊະຣາ ສເວີຍຣາຊສົມບັດຢູ່ໃນເມືອງຊື່ ວັນທະເທສະ ມີສັດທາໂອຍທານໄທຍະທັມມາກນັກແກ່

ພານນາທັງຫຼາຍ ເມື່ອພານນາຈານເຂົ້າໄປຮັບຂອງທານ ອັນວິເສດນັ້ນ ພຍາກໍຖາມຫາເຫດອັນເປັນບຸນແລະບາບນໍາທຸກໆຄົນ ສ່ວນວ່າພານຜູ້ຮູ້ເຂົາກໍແກ້ໄດ້ທຸກໝູ່. ພານຜູ້ຊື່ນຸຂະບໍ່ຮູ້ເຫດສັກອັນ ທີ່ຮູ້ຮັບຈ້າງມາລ້ຽງຊີວິດຕົນສິ່ງດຽວໃນວັນ ໑ ມັນກະທໍາຕົນເປັນປະດຸຈດັ່ງຄົນຂໍທານ ນໍາໝູ່ພານເຂົ້າມາສູ່ສາລາທານ ພຍາກໍຖາມເຫດອັນວິເສດເປັນບຸນ ມັນບໍ່ຮູ້ຈັກຄຸນການສັກສິ່ງ ພຍາຈຶ່ງວ່າມັນໜ້າໃຫຍ່ປາກກວ້າງຢູ່ເປັນຄົນໃບ້ ຖາມຄວາມໃດມັນວ່າບໍ່ຮູ້ສູຈຶ່ງຈັບເອົາມັນອອກພລັນ ພຍາບອກສັນນີ້ແລ້ວ ເຂົາກໍຊັກຄໍມັນໜີຈາກທີ່ນັ້ນ. ນຸຂະພານຫາທີ່ເພິ່ງບໍ່ໄດ້ ມັນກໍບໍ່ໄດ້ສິ່ງສັກສິ່ງ ມັນຈຶ່ງໄປໄຫວ້ວອນຂໍເອົາສິນບັດເຂົ້າຂອງດອມພຣະບໍຣະເມສວນ.

ພຣະບໍຣະເມສວນເທວະດາອັນຢູ່ໃນວັດວິນທະຍະ ກໍຮູ້ວ່າມັນມີປັນຍາໜ້ອຍ ຈຶ່ງກ່າວວ່າ ມຶງນີ້ມີບຸນໜ້ອຍພຍາກໍບ້ອຍບໍ່ອາດຈັກທະຣົງເຄື່ອງຂອງສິນບັດໃຫ້ໝັ້ນຄົງກັບຕົນໄດ້ ຄັນກູໃຫ້ເຂົ້າຂອງ ອັນນີ້ແກ່ມຶງດັ່ງນັ້ນພຍາຮູ້ຂ່າວກໍຈັກຂ້າມຶງເສັຽງ່າຍດາຍ ມຶງທີ່ເອົາແມ່ງົວຕົວນີ້ເມືອລ້ຽງໄວ້ໃຫ້ລູກມັນອອກເຖີ້ນ ຄັນລູກງົວຊີ້ທີ່ໃດທີ່ນັ້ນມຶງຫາກຈັກໄດ້ຄໍາມາລ້ຽງຊີວິດແຫ່ງມຶງ. ນຸຂະພານເອົາແມ່ງົວຕົວນັ້ນເມືອລ້ຽງບໍ່ນານທີ່ໃດກໍອອກລູກຕົວ ໑ ອອກມາແລ້ວ ລູກງົວຊີ້ໃສ່ທີ່ໃດໆກໍມີຄໍາເປັນຊີກໆ ນຸຂະພານທີ່ຮູ້ເກັບເອົາຄໍາຊີ້ງົວນັ້ນມາຂາຍສູ່ຄົນທັງຫຼາຍກິນສິ່ງດຽວແລ ແຕ່ບໍ່ຮູ້ຮັກສາລູກງົວຕົວນັ້ນໄວ້ໄດ້ ລູກງົວກໍລອດຕະເດີນໄປສູ່ໂຮງມ້າພຍາ ຈ່າມ້າທັງຫຼາຍເຂົາກໍເອົາລູກງົວນັ້ນເມືອຖວາຍແກ່ພຍາໆກໍໃຫ້ຜູກລູກງົວຕົນນັ້ນ ໄວ້ໃນໂຮງມ້າທີ່ນັ້ນ ນຸຂະພານຜູ້ໃບ້ໃສ່ໃຈວ່າ ພຣະບໍຣະເມສວນບໍ່ຮູ້ຄຸ້ມຄອງແລ

ວາງລູກງົວໃຫ້ໄປທີ່ອື່ນ ຂື້ນໂຮງມ້າທ້າວພຍາສັນນີ້ ມັນຈຶ່ງແບກຄ້ອນອັນ
ໃຫຍ່ວ່າຈັກຕີຮູບພຣະບໍຣະເມສວນ ພຣະບໍຣະເມສວນເທວະດາອອກມາ
ຕ້ອນ ຖາມມັນດູຮູ້ອາການທັງມວນແຈ້ງແລ້ວ ຈຶ່ງກ່າວວ່າ ມຶງຢ່າຮ້ອນ
ໃຈກູຫາກຈັກໃຫ້ໄດ້ລູກງົວຄືນມາ ເທວະດາກ່າວແລ້ວກໍຂຽນໂສກບົດນຶ່ງ
ໃສ່ໃບຕານໃຫ້ພານເອົາໄປຜູກໄວ້ທາງປະຕູເຂົ້າຄຸ້ມໃຫ້ແຈ້ງ ທ່ານຈຶ່ງ
ເຮັດໃຫ້ລູກງົວນັ້ນຄືນແກ່ນຸຂະພານເຖີ້ນ. ເມື່ອຮຸ່ງເຊົ້າພຍາສເວີຍເຂົ້າ
ນ້ຳແລ້ວ ກໍເຫັນໃບຕານຜູກຢູ່ກັບປັກຕູທາງເຂົ້າຄຸ້ມຫັ້ນ ຈຶ່ງໃຫ້ຄົນໃຊ້ໄປ
ເອົາໃບຕານນັ້ນມາອ່ານດູກໍເຫັນໂສກອັນນີ້ວ່າ:

"ດູລາ ມະຫາຣາຊເຈົ້າຕົນເປັນໃຫຍ່ກວ່າທ່ານທັງຫຼາຍ ເຈົ້າກູ
ຈົ່ງກ່າວຍັງຖ້ອຍຄຳອັນທ່ຽງແທ້, ລູກງົວຕົວນ້ອຍນັ້ນ ມັນເກີດແຕ່ແມ່ງົວ
ລື ຮູ້ວ່າມັນເກີດແຕ່ແມ່ມ້າ, ທ່ານຢ່າຕົວະຢ່າລ່າຍເຖີ້ນ, ຣາຊາພຍາຜູ້
ເປັນໃຫຍ່ກວ່າຄົນທັງຫຼາຍກ່າວວ່າ ໄພລູກໃນໃຕ້ນ້ຳສມຸດຍ່ອມຮຸ່ງເຮືອງ
ແລມີສັນໃດ, ອັນວ່າສັດໂລກທັງມວນ ເຂົາກໍກ່າວໂດຍຄວາມວ່າດັ່ງນີ້
ຢ່າຕົວະຢ່າລ່າຍຄຳມີແນວໃດໃຫ້ວ່າແທ້. ເຫດດັ່ງນັ້ນເທວະດາຕົນຮັກ
ສາໂລກເລົ່າກ່າວໂສກອັນນີ້ໄວ້ "ຂຸນໄດ້ເປັນໃຫຍ່ຍໍຍົກເພິ່ງກ່າວຄວາມ
ປາກົດທ່ຽງແທ້ລ້ວນຖ້ອນຖ້ອຍຄຳກົດກອງອື່ນ ຜູ້ໂລກເລີຍຕາມແລ້ວ
ລວດເປັນຄຳລ່າຍໂດຍຂຸນ" ພຍາໄດ້ຟັງໂສກອັນນີ້ກໍຮູ້ອັດຖະກົດຈະແຈ້ງ
ນັກ ຈຶ່ງຂືນລູກງົວຕົວນັ້ນໃຫ້ແກ່ນຸຂະພານ.

ເມື່ອຜີທັງຫຼາຍໄດ້ຍິນນິຍາຍອັນນີ້ລວດບໍ່ເອົາມະຫານຸຂີປິສາດເປັນ
ພຍາ ແຕ່ນັ້ນຜີໂຕຊື່ວ່າທຸກຂະຊີບໍ່ຍອມຊ້ຳເລົ່ານິຍາຍອັນ ໑ ມາສາທົກ

(ຍົກຕົວຢ່າງມາອ້າງ) ຊື່ວ່າຜູ້ດອຍກຳລັງນີ້ຢ່າວ່າບໍ່ນັບເຂົາບາ! ເມື່ອເຂົາພ້ອມພຽງກັນກໍຍັງອາດໄດ້ຄ້ຳຊູຜູ້ມີກຳລັງມາກ ໃຫ້ເຖິງສຸຂສວັສດີກໍມີດາຍ, ພີ່ທັງຫຼາຍຖາມເລື່ອງເປັນຢ່າງໃດ? ທູກຂະຊີເລົ່ານິຍາຍ:

## ນິທານທີ ໕

## <u>ເລື່ອງພຣະຣາມະຣາດ</u>

ໃນຄັ້ງນື່ງພຍາຣາມະຣາດ ຄາດເພ່ອງແພຂ້າມນ້ຳມະຫາສມຸດຈັກໄປສູ່ລັງກາທີບ, ໝູ່ກະຮອກ, ກະແຕທັງຫຼາຍເຂົາກໍລົງອາບນ້ຳໃຫ້ຊຸ່ມຂົນແລ້ວກິ້ງເກືອກເອົາຊາຍຕິດຕົນໄປສູ່ພວງແພອັນນັ້ນ ຈື່ງສັ່ນຂົນໃຫ້ຊາຍຕົກລົງ, ໝູ່ຮອກແລະລີງທັງຫຼາຍມີ<u>ຫຸຣະມານ</u>(ຫະນຸມານ) ເປັນຕົ້ນ ເຂົາກໍຊ່ອຍໃຫ້ພວງແພນັ້ນດີ ພຍາຣາມະຣາດເຈົ້າຈື່ງຂ້າມໄປສູ່ລັງກາໄດ້. ອີກເລື່ອງນື່ງຜູ້ມີກຳລັງນ້ອຍແລະຮັກສາຜູ້ມີກຳລັງມາກໃຫ້ສວັສດີກໍຍັງມີ.

ໃນປາງກ່ອນພູ້ນ ມີປ່າທີ່ນື່ງຊື່ວ່າ ວັນຫຍາປະວິ ມີໝູ່ຊ້າງພັນ ໑ ອາສັຍຢູ່ແລະມີຊ້າງຕົວ ໑ ເປັນນາຍແກ່ຊ້າງທັງຫຼາຍ, ແລະມີໝູ່ໝູທັງຫຼາຍເປັນອັນມາກຢູ່ໃນປ່ານັ້ນ ໝູຕົວ ໑ ຊື່ວ່າ ນັຕຍະນິຕາ ເປັນພຍາແກ່ໝູທັງຫຼາຍ, ພຍາຊ້າງກັບພຍາໝູ ຂາທັງສອງກໍກະທຳເປັນມິດສະຫາຍຮັກແພງກັນ ມູນຕີຊ້າງຕົວ ໑ ກໍຫ້າມພຍາຊ້າງວ່າດັ່ງນີ້ "ເຈົ້າຜູ້ມີກຳລັງມາກອາດຈັກອົບກັບອາຊີກໍໄດ້,ສ່ວນຊ້າງໝູທັງຫຼາຍນີ້ດອຍກຳລັງແຕ່ຢູງວອດບິນບິນຊຸດລົງມາຈັບເອົາກໍໄດ້, ເຈົ້າກູຢ່າໄດ້ກະທຳມິດສະຫາຍກັບໝູຕົວດອຍກຳລັງສັບນີ້ເຖີ້ນ". ພຍາຊ້າງຈື່ງກ່າວວ່າ ຄົນຜູ້ງຈັກຫຼີບເສື້ອຜ້າເຂົາຍ່ອມຫາເຂັມກັບຟ້າຍບໍ່ຫ່ອນຫາສື່ອກັບເຫຼັກຊີ, ຄົນຜູ້ງບ່ອງໄມ້

ເຂົາຍ່ອມໃຫ້ໄດ້ສື່ອກັບເຫຼັກຊີ້ນັ້ນດາຍ, ກູກະທຳມິດສະຫາຍກັບໝູ່ສັນນີ້ ມັນກໍຫາກຍ່ອມຮູ້ທີ່ຊ່ອຍເຫດການແຫ່ງເຮົາ ມຶງຢ່າຫ້າມກູໄປພາຍໜ້າໝູ່ຊ້າງທັງຫຼາຍກໍຢ້ານກົວຢຳແຢງໝູ່ທັງຫຼາຍ.

ຍັງມີໃນວັນ ໑ ໝໍຊ້າງກໍໄປປ່າເຫັນໝູ່ຊ້າງມາກນັກ ມັນຈຶ່ງຂຸດຂຸມໄວ້ຫົນທາງ ພຍາຊ້າງບໍ່ຮູ້ຈັກກໍໄປຫຼົ່ນຕົກລົງຂຸມຫັ້ນ. ພຍາໝູ່ຮູ້ວ່າພຍາຊ້າງຕົກຂຸມຈຶ່ງຊວນໝູ່ທັງຫຼາຍຝູງເປັນບໍຣິວານຂອງຕົນມາ ຊ່ອຍເອົາພຍາຊ້າງອອກຈາກຂຸມ ລາງຊຸມໝູ່ເຂົາກໍກັດກິ່ງໄມ້ແລະເຄືອເຂົາເອົາໄປໃສ່ໃນຂຸມ, ລາງພ່ອງຄວັດສອງຕາບຂ້າງຂຸມນັ້ນໃຫ້ຂີ້ຂອຍຕົກລົງຂຸມພຍາຊ້າງຊັກຕີນອອກກໍຈຶ່ງພົ້ນຈາກປາກຂຸມນັ້ນໄດ້.

ເຫດດັ່ງນັ້ນ ອະສຸພາຄຍະ ຈຶ່ງກ່າວໂສກອັນນີ້ວ່າ: "ປະດຸຈດັ່ງພຍາໝູ່ຕົວມີກຳລັງອັນນ້ອຍນັ້ນ ຍັງຮັກສາຊ້າງຕົວມີກຳລັງມາກ ອັນເປັນພຍາແກ່ໝູ່ຊ້າງທັງຫຼາຍ".

ດັ່ງນັ້ນ ເທວະດາ ຕົນຮັກສາໂລກຈຶ່ງກ່າວໂສກນີ້ໄວ້ປຽບທຽບວ່າ: "ເປັນຄົນຢ່າໂອດອ້າງເຮອແຮງ ສຸດກຳລັງຕົນແຂງຫ່ອນໄດ້ ຝູງພານນ້ອຍເພິ່ງແພງຮັກຮ່ອມເຂົາແອ ການໜັກນ້າງໄວ້ແຕ່ງໃຫ້ເຂົາຊູ".

ຜີໂຕນຶ່ງຊື່ວ່າ ປາດາລະມຸຄິດີ ກ່າວວ່າ ເຮົາເອົາທຸລັບພີທັກຄະປີສາດ ເປັນພຍາແກ່ເຮົາເຖີ້ນ ຜີໂຕນຶ່ງຊື່ວ່າ ສາຣະຕະກາ ຫ້າມເສັຽວ່າບໍ່ດີ ມັນທີ່ຮູ້ແຕ່ຈຳທານໃຫ້ເຮັດສິ່ງດຽວ ເປັນດັ່ງວະສະລະກະໝາຈິກຈອກຊອນເສືອໄປກິນຄົນ ສ່ວນຕົວມັນເລົ່າຕາຍ ເພາະຕິຂຸບາຍຜິດນັ້ນດາຍ. ຜີທັງຫຼາຍຖາມເຣື່ອງເປັນຢ່າງໃດ? ປາດາລະມຸຄິດີເລົ່ານິຍາຍ:

## ນິທານທີ ໙

## ເຣື່ອງ ໝາຈິກຈອກຊວນເສືອໄປກິນຄົນ

ແຕ່ປາງກ່ອນພຸ້ນ ມີນະຄອນນຶ່ງຊື່ວ່າ ອາຄະບຸຣີ ພໍ່ຄ້າທັງຫຼາຍເຊິ່ງຢູ່ໃນເມືອງນັ້ນ ເຂົາກໍຊວນກັນໄປຊື້ມ້າໄດ້ແລ້ວຈຶ່ງກັບຄືນມາ ຄັນມາເຖິງດ່ານປ່າທີ່ນຶ່ງ ອັນມີໝູ່ໂຈນແລະຜີເສື້ອອາສັຍຢູ່ມາກ ພວກພໍ່ຄ້າກໍພາກັນພັກເຊົາຢູ່ໃນປ່ານັ້ນ ເຂົາກໍຜູກມ້າໄວ້ຮຽງກັນຢູ່ທ່ຳກາງ ແລ້ວຈຶ່ງຕົກຍາມກັນເຝົ້າພາຍນອກແລະແຕ່ງເຄື່ອງພະລີກັມ ຣາທນາຜີເສື້ອອະວິງອາຣະມາໃຫ້ກະທຳຮັກສາຄຸ້ມຂອງໝູ່ທັງຫຼາຍແລ້ວຮ່າຍມົນອັນນີ້ວ່າ "ໂອມອະວິງອາໂຣອັກຂະ ພຸນຊຸນຕຸ ສວາຫາຍະ" ວ່າ ໓ ທີແລ້ວ ຈຶ່ງນອນເຝົ້າມ້າເຂົາ ສ່ວນວ່າຜີເສື້ອອະວິງອາຣະ ກໍມາຢູ່ເຝົ້າຮັກສາດີນັກ ແມ່ນໂຈນຈັກມາລັກເອົາກໍບໍ່ໄດ້ສັກຕົວ.

ຍັງມີເສືອຕົວນຶ່ງແຮງນັກ ເຕັ້ນໂຕນເຂົ້າມາຢູ່ກັບໝູ່ມ້ານັ້ນ ມີໂຈນຜູ້ນຶ່ງຫານນັກລັກລອບເຂົ້າມາສູ່ໝູ່ມ້າ ມັນເຫັນເສືອຢືນຢູ່ກໍໃສ່ໃຈວ່າແມ່ນມ້າ ມັນຈຶ່ງເຕັ້ນຂຶ້ນຫຼັງເສືອ ເສືອເຫັນໂຈນກໍຄຶດວ່າແມ່ນຜີເສື້ອອະວິງອາຣະຂຶ້ນຂີ່ຫຼັງຕົນ ເສືອກໍສະດຸ້ງຕົກໃຈກົວ ຈຶ່ງພາໂຈນເຕັ້ນອອກຈາກໝູ່ມ້າແລ່ນມາເຖິງສາລາທີ່ນຶ່ງ ໂຈນຈຶ່ງໂຕນຈາກຫຼັງເສືອແລ້ວແລ່ນເຂົ້າສູ່ສາລາຫັບປະຕູໄວ້. ເສືອຮູ້ວ່າຜີເສື້ອວາງຕົນເສັຽແລ້ວກໍຄ່ອຍຍ່າງໄປຕາມປົກຕິ.

ມີໝາຈິກຈອກຕົວນຶ່ງຊື່ວ່າ ອະສະລະກະຈຶ່ງກ່າວຕໍ່ເສືອວ່າ "ເຈົ້ານີ້ຂີ້ຢ້ານລະອາຫານເສັຽແລ້ວແລ່ນໜີ ອັນນັ້ນບໍ່ໃຊ່ຜີ ແມ່ນຄົນດາຍດອກ ໂຕຈົ່ງຄືນໄປກິນຄົນຜູ້ນັ້ນເຖີ້ນ" ເສືອກ່າວວ່າກູຄຶດວ່າແມ່ນຜີເສື້ອກູຈຶ່ງສະ

ທ້ານຢ້ານໃຈກົວ ກູລອດບໍ່ເອົາມັນມາ, ບັດນີ້ມັນເຂົ້າຢູ່ໃນສາລາຫັບປະຕູ
ໄວ້ແລ້ວ ກູກໍເອົາມັນບໍ່ໄດ້ ພາຈິກຈອກກ່າວວ່າ ກູຫາກຈັກໄຂປະຕູໃຫ້
ເອົາ ໂຕຈົ່ງໃຫ້ຊີ້ນແກ່ເອົາພູດນຶ່ງເຖີ້ນ. ເສືອໄດ້ຟັງຄຳພາຈິກຈອກເວົ້າ
ດັ່ງນັ້ນ ກໍດີໃຈມາກ ຂາລອດເຊອນກັນຄືນມາສູ່ສາລາ ທີ່ໂຈນເຊົາຢູ່ນັ້ນ
ແລ້ວພາຈິກຈອກ ກໍຄ່ອຍເອົາຫາງແຫຍ່ເຂົ້າໄປໃນປະຕູຊຸກອັດແກ່ວງໄປ
ມາຈັກໄຂປະຕູ ໂຈນກໍຈັບຈ່ອງຫາງພາຈິກໄວ້ ພາກໍຊັກດຶງຫາງອອກບໍ່ໄດ້
ໜຶ່ງແລ້ວຮ້ອງໃຫ້ເຫຼືອຕາຍຢູ່ ເສືອຈຶ່ງກ່າວຕິຕຽນພາວ່າ "ມຶງມາຮ້ອງ
ຫາຫົວຫາຫາງມຶງອີ່ຫຍັງຢູ່ຫັ້ນ ບັດນີ້ຫາງມຶງຊິຂາດແລ້ວ ມຶງມານົວກະທຳ
ອາການໜຶ່ງແລ້ວໜຶ່ງພັນຫຼີ້ນຢູ່ສັ້ນນີ້ບໍ່? ຜີມຶງຍັງມີຊີວິດແຫ້ບໍ່ຕາຍ ຮ້ອຍ
ວ່າແມ່ນບຸນມຶງຫຼາຍເປັນຄວາມສວັສດີຂອງມຶງ" ເສືອກ່າວທໍ່ນັ້ນແລ້ວກໍ
ແລ່ນໜີໄປສູ່ປ່າພຸ້ນ. ໂຈນຈຶ່ງຂ້າພາຈິກຈອກຕົວນັ້ນຕາຍ.

ເຕດນັ້ນ ຜີທັງຫຼາຍເລີຍບໍ່ເອົາຫຼັບພີທັກຄະປີສາດເປັນພຍາ. ຖັດ
ນັ້ນຜີຕົວນຶ່ງຊື່ວ່າຍູພັກຂະ ກ່າວວ່າເອົາມາເອົາປັນຈະປີສາດເປັນພຍາແກ່
ເອົາເຖີ້ນ. ຜີໂຕນຶ່ງຊື່ວ່າ ພຍະຄາອີຫ້າມເສັຽວ່າບໍ່ດີ ຈັກເປັນດັ່ງກະ
ຕ່າຍຕົວະລ່າຍໃຫ້ຣາຊສີຕາຍນັ້ນແລ ຜີທັງຫຼາຍຖາມວ່າ ເຣື່ອງເປັນຢ່າງ
ໃດ? ພຍະຄາອີ ເລົ່ານິຍາຍ:

## ນີທານທີ ໑໐

## ເຣື່ອງ ກະຕ່າຍຕົວະລ່າຍຣາຊສີຕາຍ.

ເມື່ອກ່ອນພຸ້ນ ຍັງມີປ່າໃຫຍ່ໃພພາທີ່ນຶ່ງ ອັນເຕັມໄປດ້ວຍໝູ່ເນື້ອທັງ
ຫຼາຍ ມີຣາຊສີຕົວ ໑ ເປັນພຍາຮັກສາເຂົາບໍ່ໃຫ້ຄົນຜູ້ໃດຜູ້ນຶ່ງ ມາກະທຳ

ຮ້າຍໄດ້ ຣາຊສີກໍກິນເນື້ອນັ້ນຊູ່ວັນ. ຕໍ່ມາໃນວັນນຶ່ງຈຶ່ງວຽນມາເຖິງແກ່ຟານສາມຕົວ ພໍ່, ແມ່, ແລະລູກເຂົາ ຟານຕົວຜົວວ່າໃຫ້ເມັຽຢູ່ ມັນຈັກໄປຕາຍເສັຽ ເມັຽວ່າໃຫ້ຜົວຢູ່ມັນຈັກໄປຕາຍ ຕົວລູກວ່າໃຫ້ພໍ່ແມ່ຢູ່ ມັນຈັກໄປໃຫ້ຣາຊສີກິນກ່ອນ. ພຍາກະຕ່າຍຕົວ ໑ ໄດ້ຍິນເຂົາເວົ້າກັນດັ່ງນັ້ນ ຈຶ່ງກ່າວວ່າ ສູທ່ານທັງສາມຕົວ ຢ່າພາກັນຕາຍສັກຕົວຖ້ອນ ກູຍັງຮູ້ອຸບາຍອັນນຶ່ງ ກູຫາກຈັກຕິປອງໃຫ້ຣາຊສີຕາຍ ກະຕ່າຍກໍເລົ່ານິຍາຍອຸບາຍເບື່ອງນຶ່ງ ແກ່ຟານສາມຕົວນັ້ນຟັງວ່າດັ່ງນີ້ະ

ເມື່ອກ່ອນພຸ້ນ ໃນບ້ານພານບ້ານນຶ່ງຊື່ວ່າ ເອກະຈະກິ ມີຜີເສື້ອໂຕນຶ່ງຊື່ວ່າ ພຣະກະຮັກຂະ ຍ່ອມມາກິນພານແລະວັນແລະຄົນຢູ່ຊູ່ວັນ. ຍັງມີພຍາທັງ ໕ ຕົນຊື່ວ່າ ປັນຈະປັນທະວະ ແລ້ວມີພຍາຮ້ອຍເອັດພຣະອົງອັນມີພຍາຕົນນຶ່ງຊື່ວ່າ ພຍາທຸຍໂຍທະນະເປັນຫົວໜ້າຫາກພາຍແພ້ເຂົາແລ້ວ ກໍເອົາເຂົາເຂົ້າໃສ່ໄວ້ໃນກະຕຶບອັນ ໑ ເອົາໄຟເຜົາໃຫ້ໄໝ້ ແລ້ວພຍາທັງ ໕ ຕົນນັ້ນ ກໍຂຸດດິນໜີໄປເຖິງປ່າທີ່ນຶ່ງ ແຕ່ນັ້ນມີຜີເສື້ອຕົວນຶ່ງຊື່ວ່າ ນະຫິມພະວະນະຢູ່ຫັ້ນ ພຍາທັງ ໕ ກໍກະທຳຜີເສື້ອໂຕນັ້ນໃຫ້ຕາຍ ເອົາເມັຽມັນຜູ້ຊື່ວ່າ ກະມະລະພະລີ ເອົາລູກມັນຜູ້ຊື່ວ່າ ຄະໂທຄະຊະນັ້ນມາໃຫ້ເປັນເມັຽແລະລູກແກ່ພີມມະເສນະກຸມມານ ອັນເປັນນ້ອງຊາຍຫຼ້າເຂົາ ແລ້ວ ເຂົາເຈົ້າກໍເອົາກັນໄປສູ່ເມືອງປັນຈະນະຄອນ ມາເຖິງບ້ານພານຊື່ເອກະຈະກິ ເຂົາເຈົ້າເລົ່າພັກເຊົາຢູ່ເຮືອນພານນັ້ນ. ໃນວັນນັ້ນຜີເສື້ອຜູ້ຊື່ວ່າ ພຣະກະຮັກຂະ ຈັກມາກິນພານຜູ້ນັ້ນ ລູກເມັຽມັນກໍຮ້ອນອົກຮ້ອນໃຈ ພຍາປັນຈະປັນທະວະ ໕ ຕົນ ຈຶ່ງກ່າວວ່າ ສູຢ່າຮ້ອນໃຈເຖີ້ນ ກູເຄີຍຂ້າ

ຜີຕາຍບໍ່ມັນໄດ້ແລ້ວດູທາງຈັກຂ້າຜີເສືອນີ້ໃຫ້ມັນຕາຍ . ເຂົາຈຶ່ງໃຫ້ພົມມະເສນະກຸມມານຜູ້ໃຈຫານແກ່ກ້າໄປຂ້າຜີເສືອ ພຍາກະອັກຂະໃຫ້ຕາຍເສັຽແລ້ວ ກໍປອຍພານຜູ້ນັ້ນກັບທັງຊາວເມືອງທັງຫຼາຍໃຫ້ພົ້ນຈາກຄໍາຕາຍຫາຍໄປ ໃຫ້ໄດ້ຢູ່ສຸກສວັສດີຊູ່ຄົນ.

ກະຕ່າຍເລົ່ານິຍາຍອັນນີ້ໃຫ້ແກ່ພານ ມ ຕົວນັ້ນຟັງ ບໍ່ໃຫ້ເຂົາຢ້ານກົວແລ້ວຈຶ່ງເຂົ້າໄປຫາອາຊສີ ມັນເຫັນນ້ຳໃນເຫວບ່ອນນຶ່ງຂ້າງທາງ ມັນກໍກໍານົດໄວ້ແລ້ວ ຈຶ່ງໄປກ່າວຄໍາຕົວະລ່າຍອາຊສີດັ່ງນີ້ "ຂ້າແກ່ເຈົ້າກູຂ້າມາເຫັນອາຊສີຕົວນຶ່ງໃຫຍ່ນັກເຂົ້າມາວ່າຈັກເອົາພານ ມ ຕົວ ອັນເປັນອາຫານຂອງກິນແຫ່ງເຈົ້ານັ້ນ ຂ້າຫ້າມແລ້ວກໍບໍ່ຟັງມັນຍັງວ່າຈັກກິນທັງຕົວຂ້າອີກຊ້ຳບໍ່ໝໍາມັນຍັງທ້າທາຍວ່າຈັກເອວເຈົ້າກູ" ຄັນອາຊສີໄດ້ຍິນຄໍາກະຕ່າຍຕົວະລ່າຍສັນນັ້ນ ກໍມີຈິດໂກດໂກທາເປືອຕົນສັ່ນຢູ່ທົດໆ ອົດຄໍາຄຽດບໍ່ໄດ້ຈຶ່ງໃຫ້ກະຕ່າຍພາໄປສູ່ທີ່ແຫ່ງອາຊສີຕົວຈັກມາຮາວີຕົນນັ້ນ ຄັນວ່າເຖິງນ້ຳເຫວແຫ່ງນັ້ນກະຕ່າຍຈຶ່ງຕົວະລ່າຍວ່າ "ຂ້າແກ່ເຈົ້າກູ ອາຊສີຕົວຮ້າຍເຂົ້າລີ້ຢູ່ຫັ້ນເຈົ້າກູຈົ່ງຫຼຽງແລດູຫັ້ນເຖີ້ນ" ອາຊສີຫຼຽງແລດູນ້ຳໃນເຫວອັນນັ້ນເຫັນເງົາຕົນກະທໍາສິ່ງໃດມັນກະທໍາສິ່ງນັ້ນນໍາຕົນ ລວດໃສ່ໃຈວ່າອາຊສີຕົວຮ້າຍເຂົ້າລີ້ຢູ່ໃນທີ່ນັ້ນແທ້ ຈຶ່ງພ້າວແລ່ນໄປຊົນກໍເລີຍຕົກລົງໃນເຫວນ້ຳທີ່ນັ້ນຕາຍ. ກະຕ່າຍຕົວນັ້ນຕົວະລ່າຍໃຫ້ອາຊສີຕາຍແລ້ວ ລວດປ່ອຍພານ ມ ຕົວນັ້ນ ໃຫ້ຢູ່ສວັສດີສັນນີ້ແລ.

ເຫດດັ່ງນັ້ນ ອະສຸພາຄຍະ ຈຶ່ງກ່າວໂສກອັນນີ້ວ່າ "ດູລາຊາວເຮົາອັນວ່າຄົນຜູ້ໃດແມ່ນເປັນໃຫຍ່ເປັນຜູ້ຢູ່ສູງກໍດີ ມີຄວາມຄຽດມາກ ທາຄໍາ

24/VII
ห้ามจำหน่าย

ພິຈາລະນາດູໂທດແລະຄຸນບໍ່ໄດ້ ອັນຜູ້ຮູ້ຕິອຸບາຍນັ້ນ ຍ່ອມມາປະຈົບແພ້ຈົບ ຫາຍໄປໄດ້ ເໝືອນດັ່ງຣາຊສີຫົວເປັນພຍານແກ່ເນື້ອທັງຫຼາຍ ໄດ້ເຖິງເຊິ່ງ ອັນຈົບຫາຍຕາຍເສັຽ ເພາະເຫດກະຕ່າຍຕົວຮູ້ລ່າຍລ້ຽງອຸບາຍຕົນນັ້ນ".

ເທວະດາຕົນຮັກສາໂລກ ຈຶ່ງກ່າວໂສກອັນນີ້ໄວ້ສອນຄົນວ່າ "ເປັນຄົນຢ່າຂອດອ້າງຍໍຕົວ ມັນຍ່ອມໂກດຕາມໃຈຕົວ ອົດບໍ່ໄດ້ ກ່າວຄຳໃດຜິດຮີດໃຊ້ຫົວໂຫຍໄປແລ ຜູ້ຮູ້ອາຮີຕີຕຽນຕ້ານ ວ່າຍ່ອມແພ້ມັນເອງ".

ຜີຜູ້ຊື່ວ່າ ດູຮັ້ງຄະນາສີ ກ່າວວ່າ ນາເອົາຜູ້ຮູ້ຕິປອງອຸບາຍເປັນພຍານແກ່ພູ່ເຮົາຈະດີແທ້. ຜີທັງຫຼາຍຖາມວ່າຜູ້ຮູ້ຕິປອງອຸບາຍນັ້ນ ມີເຣື່ອງເປັນຢ່າງໃດ? ດູລັ້ງຄະນາສີເລົ່ານິຍາຍ:

## ນິທານທີ ໑໑

## ເຣື່ອງ ການະກະປາລະ

ໃນປາງກ່ອນພູ້ນ ມີນະຄອນອັນນຶ່ງຊື່ວ່າ ກັລຍານະບຸຣີ ຢູ່ໃນສິນທະປະເທດ. ມີພໍ່ຄ້າຜູ້ນຶ່ງຊື່ວ່າ ການະກະປາລະ ເມັຽມັນຊື່ວ່າ ນາງສຸນທະຣີ ມີໃຈຮັກຜົວ ບໍ່ຢາກພາກຈາກຜົວໄປໃສໄດ້ເລີຍ. ໃນຄັ້ງ ໑ ຜົວຈັກໄປຄ້າສະເພົາບໍ່ເອົາເມັຽໄປນຳ ເພາະວ່າໄດ້ໄປທາງໄກ ໃຫ້ເມັຽເຝົ້າເຮືອນບໍ່ໃຫ້ລຳບາກດ້ວຍຄວາມຍາກກະສັນ ມັນຈຶ່ງເຂົ້າໄປສູ່ສະຫາຍຂອງຕົນອັນເປັນຊ່າງໄມ້ ແລ້ວກ່າວວ່າສະຫາຍຈົ່ງແປງຮູບຍົນອັນ ໑ ສເມີຕົນເຮົານີ້ໃຫ້ມີອົງຄະພ້ອມຊູ່ອັນແລ້ວ ຍົນອັນນັ້ນໃຫ້ຮູ້ເສບການຕ່າງໃຈແທ່ງຜູ້ຍິງໃຫ້ແກ່ເຮົາໆຫາກຈັກໃຫ້ຄ່າຈ້າງຮາງວັນແກ່ສະຫາຍ. ຊ່າງໄມ້ກໍແປງຮູບຍົນອັນນັ້ນແລ້ວ ຈຶ່ງສອາດທີຍານມົນເຂົ້າໃນຍົນນັ້ນຄັນຈັບຖູເບື້ອງຂວາ

ຍົນອັນນັ້ນກໍລຸກມາ ເສບການະຄຸນໃຫ້ ຄັນວ່າຈັບຫູເບື້ອງຊ້າຍຍົນນັ້ນກໍຍ້າຍວາງເສັງ ແລ້ວທອດຕົນນອນຢູ່ຂອງເກົ່າ. ເມື່ອແຕ່ງແປງຮູບຍົນດີແລ້ວໃຫ້ນຸ່ງເສື້ອຜ້າສົມຄວນ, ໃຫ້ນອນຢູ່ເໜືອອາສນາອັນດີຈຶ່ງເອົາໄປໃຫ້ແກ່ສະຫາຍຂອງຕົນ ນາຍການະກະປາລະ ກໍໃຫ້ຄ່າຈ້າງຮາງວັນແກ່ຊ່າງໄມ້ ແລ້ວຈຶ່ງຮຽກເມັຽມາກ່າວວ່າ "ຂ້ອຍນີ້ຈັກໄປຄ້າທາງສະເພົາໃຫ້ເຈົ້າຢູ່ເຝົ້າເຮືອນຮານີ້ເນີ ເມື່ອໃດເຈົ້າກະສັນໂສກທຸກຈຶ່ງເຂົ້າໄປຈັບຫູຍົນເບື້ອງຂວາມັນຫາກຈັກລຸກມາເສບສົມເຈົ້າແລ້ວ ຄັນວ່າເຈົ້າຈັບຫູເບື້ອງຊ້າຍຍົນນັ້ນກໍຈັກວາງເຈົ້າແລ້ວໄປນອນຢູ່ດັ່ງເກົ່າ". ນາງສຸນທະຣີກະທຳຕາມຜືອຂອງຕົນນັ້ນຊູ່ອັນ ກໍລອດຫາຍຄວາມກະສັນແຫ່ງຕົນ ກິຈການອັນຕົນມັກນັ້ນແມ່ນຢູ່ປາສຈາກຜືອກໍໄດ້ ສ່ວນຜືອມັນນັ້ນກໍໄປສູ່ສະເພົາກັບພໍ່ຄ້າທັງຫຼາຍ.

ຍັງມີໂຈນຜູ້ນຶ່ງໄປຄວ່າລັກເຂົ້າຂອງທ່ານໄດ້ຄຳພັນນຶ່ງໜີມາໃນເວລາພ່ຽງຄືນນັ້ນ ມັນກໍເຂົ້າໄປເພື່ອຈະລັກຂອງໃນເຮືອນນາງສຸນທະຣີຜູ້ເປັນເມັຽຂອງການະກະປາລະນັ້ນ ໂຈນເຫັນຮູບຍົນກໍໃສ່ໃຈວ່າແມ່ນຕຸ້ມປີກພິກຂອງໄວ້ ມັນຈຶ່ງໄປຄຳດູໄດ້ຖືກຫູຍົນເບື້ອງຂວາ ຮູບຍົນນັ້ນຄວາຄີລຸກມາກອດກັນທອດທ່າວທັບໂຈນຜູ້ນັ້ນໄວ້ແລ້ວລອດເສບຄຸດທວານ (ຮູຂີ້) ຂອງໂຈນນັ້ນ ມັນຮ້ອງຂຶ້ນທີ່ໃດຮູບຍົນກໍບໍ່ວາງ ຍາມນັ້ນນາງສຸນທະຣີຮີບໄປເບິ່ງເຫັນໂຈນເຈັບລຳບາກ ຮ້ອງອ້າປາກຫາໃຈຢູ່ສະງາບໆນາງຈຶ່ງຖາມວ່າ "ເຈົ້າຈັກເອົາອັນໃດໃຫ້ເປັນຂອງຈ້າງແກ່ຂ້ອຍນັ້ນຈາ"? ໂຈນຜູ້ນັ້ນອົດບໍ່ໄດ້ກໍໃຫ້ຄຳພັນນຶ່ງແກ່ນາງສຸນທະຣີ ນາງຈຶ່ງເຂົ້າໄປບາຍຈັບຫູ

ກ້ຳຊ້າຍຮູບຍົນຊັກຊົ່ນ ມັນຈຶ່ງອາງໂຈນເສັງ ແລ້ວໂຈນກໍຟ້າວໜີໄປ ຈຶ່ງຫຼຽວເຫັນໂຈນໝູ່ດຽວກັນເຂົ້າມາຈັກລັກຂອງໃນເມືອງກັລຍານະບຸຣີນັ້ນມັນຈຶ່ງຫ້າມໂຈນທັງຫຼາຍວ່າ "ສູຢ່າໄດ້ໄປລັກຂອງໃນເມືອງອັນນັ້ນເນີ ຫືວ່າສູບໍ່ຟັງຄຳກູສູຈັກໄດ້ຕ້ອງທຸກອັນຖຸບັດ ກັບທັງເສັງສິນບັດແຫ່ງສູ ເປັນດັ່ງກູນີ້" ມັນຫ້າມເຂົາສັນນີ້ແລ້ວຈຶ່ງກ່າວໂສກອັນນີ້ວ່າ :

"ອັນວ່າເມືອງກັລຍານະບຸຣີນັ້ນ ໂຈນທັງຫຼາຍບໍ່ເພິງຈັກເຂົ້າໄປລອບລັກລ່ອງເຮືອນແລເຫດໃດກູວ່າອັນຈາ? ເຫດວ່າຍົນອັນກະທຳແລ້ວດ້ວຍໄມ້ມີຄູ່ເຮືອນໆແທ້ດີຫຼີດາຍ ເມື່ອຍາມທ່ຽງຄືນນີ້ກູເຂົ້າໄປແລບໍ່ຮູ້ຈັກວ່າຍົນມີຄູ່ກຸນເຍັງ ະ (ກຸນເຮັດ) ຄຸຖຫອານກຸແສກໆ ເປັນດັ່ງຈັກແຕກທະລາຍໄປ ອັນວ່າຄຳພັນນີ້ງກູຫາກໄດ້ໃຫ້ເປັນຂອງຈ້າງຈຶ່ງອາງກູເສັງ ກູຈຶ່ງຄ່ອຍມາທັງເຈັບ ສູຢ່າຫຼອນຄ່ວາໄປເນີ" ໂຈນທັງຫຼາຍກໍຢ້ານກົວລອດບໍ່ໄປສູ່ເມືອງອັນນັ້ນໄດ້.

ເຫດນັ້ນ ເທວະດາຕົນຮັກສາໂລກຈຶ່ງກ່າວໂສກອັນນີ້ໃຫ້ລືຊາວ່າ :

"ໂຈອັງ ລັກລອບເຂົ້າ ສະດິນຂອງ
ຈັບຖືກຍົນຈັບຈອງໄວ້ ເລີຍປອງປ້ຳເສບສິນ ແອ
ໂຈນເຈັບອ້າງຮ້ອງໄຫ້ ໃຫ້ຄ່າຈ້າງພັນຄຳ".

ສ່ວນການະກະປາລະ ມັນຮູ້ຕຶອຸບາຍໃຫ້ຫາຍຄຳກະສັນນັ້ນ ເນັ້ງມັນອັນຢູ່ເຝົ້າເຮືອນໃຫ້ສວັສດີທັງສິນບັດສັນນີ້. ເຫດດັ່ງນັ້ນຕິໂຕຊື່ວ່າ ຕຸລັງຄະນາລີ ມັກໃຄ່ໄດ້ພູ້ສລາດຮູ້ອຸບາຍມາເປັນພຍາເພື່ອດັ່ງນັ້ນ.

ຕິໂຕຊື່ວ່າ ອະຣິວາທະບໍ່ອາດຈາຣະຈາກັບເຂົາທັງຫຼາຍ ມັນຫາກມີ

ວິທີອຸບາຍກ່າວຄຳໃຫ້ຕ່າງສັນນີ້ວ່າ ຄວາມພິຈາຣະນາຕິຕາແຫ່ງເຮົາທາກເປັນແນວນຶ່ງ, ເທວະດາອາກາດທາກເປັນແນວນຶ່ງດາຍ ເຮົາບໍ່ເພິງວ່າຜູ້ໃດດີໃຫ້ເປັນພຍາດ້ວຍແທ້ມັນຍ່ອມແພ້ເສັຽເມື່ອລຸນ ເຫດນັ້ນເຮົາຈຶ່ງບໍ່ເພິງໃຈເອົາຜູ້ໃດມາເປັນພຍາແກ່ເຮົາ. ພີທັງຫຼາຍຖານວ່ານີເຣື່ອງເປັນຢ່າງໃດ? ອະຣິວາທະເລົ່ານິຍາຍ:

### ນິທານທີ ໑໔

### ເຣື່ອງ ນາງແພສຍາ

ໃນຄັ້ງກ່ອນມີເມືອງນຶ່ງຊື່ວ່າ ສີວະບຸຣີ ມີນາງແພສຍາຜູ້ນຶ່ງຊື່ວ່າ ກຸນຕະພີ ມີຮູບໂສມງາມ. ຍັງມີຊ່າງຫຼູກຜູ້ນຶ່ງ ໄດ້ເອົານາງແພສຍາຜູ້ນັ້ນມາເປັນເມັຽ ແລ້ວກໍມອບເຂົ້າຂອງສົມບັດທັງມວນໄວ້ໃຫ້ເມັຽຊູ່ອັນ ນາງແພສຍາບໍ່ຮູ້ຈັກຮັກສາສົມບັດເຂົ້າຂອງຍ່ອມຈ່າຍເສັຽໃຫ້ໝົດ ພາຍລຸນມາຜົວຫາມາໃຫ້ບໍ່ໄດ້ ນາງແພສຍາຈຶ່ງເວົ້າກັບຜົວວ່າ "ເຮົາຢ່າເອົາກັນເປັນຜົວເມັຽເຖີ້ນ ທາອັນຈັກລ້ຽງຊີວິດເຮົາບໍ່ໄດ້ແລ້ວ" ຜົວກ່າວວ່າ "ເຂົ້າຂອງຂ້ອຍຂົນຂວາຍມາໃຫ້ເຈົ້າຕ່າງກໍຈ່າຍເສັຽສັ່ງບໍ່ຮູ້ທ້ອນຫອມໄວ້ຂ້ອຍບໍ່ຢ່າບໍ່ຮ້າງແລ້ວ" ແມ່ແຫ່ງນາງແພສຍາຈຶ່ງເວົ້າກັບລູກສາວຂອງຕົນວ່າດັ່ງນີ້ "ເຈົ້າຈົ່ງປັ່ນຢາພິດໃຫ້ມຸນດີແລ້ວເອົາໃສ່ໄວ້ໃນປ້ອງໄມ້ປ່ອງ ເມື່ອຜົວເຈົ້ານອນຫຼັບ ເຈົ້າຄ່ອຍເອົາບອກໄມ້ນັ້ນຊຸກເຂົ້າໃນຄຸຖທວານຂອງມັນ ເຈົ້າຈົ່ງເປົ່າຢາພິດນັ້ນ ເຂົ້າໄປໃນທ້ອງໃນໄສ້ມັນຫາກຈັກເປື່ອຍຈັກຂາດຕາຍ". ນາງແພສຍາກໍກະທຳຕາມຄຳແມ່ບອກນັ້ນຊູ່ປະການ ຄັນຜົວນອນຫຼັບນາງຈຶ່ງຄ່ອຍເອົາບອກໄມ້ປ່ອງຊຸກເຂົ້າໃນຄຸຖທວານຜົວຂອງຕົນ ຂນະ

ນັ້ນລົມໃນທ້ອງຜົວພູ່ອອກມາ ແຮງນັກພັດເອົາຢາພິດອັນນັ້ນຄືນມາ ເຂົ້າຮູຄໍນາງແພສຍາຂືອກໍສນັກຫ່າວຕາຍເອງ. ໂດຍເຫດດັ່ງນັ້ນອະສຸພາຄຍະຈຶ່ງກ່າວໂສກອັນນີ້ວ່າ :

ອັນວ່າກິຣິຍາ ອັນເປັນກິຈການທັງມວນ ອັນຄົນຫາກຕິຄະນຶງຫາພິຈາຣະນາກັບກັນນັ້ນ ມັນຫາກປີ້ນແປ້ຜັນໄປດ້ວຍປະການສັບສົນກໍມີດາຍ, ກິຈການອັນເທວະດາກັມມະວິບາກຫາກກະທໍາໃຫ້ປີ້ນແປ້ຜັນ ໄປດ້ວຍປະການສັບສົນ, ບໍ່ເປັນດັ່ງຄົນທັງຫຼາຍຄຶດຄະນຶງນັ້ນ; ເໝືອນດັ່ງນາງແພສຍາຜູ້ຊື່ວ່າ ກຸນຕະພີໄດ້ເຖິງເຊິ່ງອັນຈິບຫາຍຕາຍໄປ ດ້ວຍເຫດອັນມັນປະກອບງ້ອນພິດໃສ່ໃນກະບອກໄມ້ ເພື່ອໃສ່ໃຈວ່າຈັກຂ້າຜົວເສັຽ ທີ່ແທ້ເລີຍແປຜັນຄືນມາຂ້າຕົວຕາຍ". ເທວະດາຕົນຮັກສາໂລກຈຶ່ງກ່າວໂສກອັນນີ້ໄວ້ສນອງຄໍາວ່າ "ແພສຍາຍິງບາບຮ້າຍຕີປອງຂ້າຜົວຕົນນອນແນບຂ້າງ ເປົ່າຢາພິດສນອງຄືນຄອບເຂົ້າປາກກໍຄາຄາຍກັບກັງອຕົນຕາຍ" ອະທິວາທະປີສາດ ກໍຊັກເອົານິຍາຍອັນນຶ່ງມາເລົ່າສູ່ຜີທັງຫຼາຍຟັງວ່າດັ່ງນີ້:

ໃນປາງກ່ອນພຸ້ນ ມີພຍາຕົນນຶ່ງຊື່ວ່າ ຈະຕະເສນ ສເວີຍຣາຊສົມບັດອັນຍິ່ງຢູ່ໃນນະຄອນຈິຕບຸຣີ ຍັງມີຊີເປືອຍຜູ້ນຶ່ງຊື່ ສະມະນາກະເປັນແກ່ ຈຶ່ງກ່າວຕໍ່ພຍາວ່າ "ນາງມະນີມີພົນສານເຕົ້າສັນນີ້ ເປັນລັກຂນະຖ່ອຍຮ້າຍຈັງໄຮ ມະຫາຣາຊເຈົ້າຢ່າເອົາໄວ້ເຖີ້ນ, ມັນມາຕົກຢູ່ເຮືອນມະຫາຣາຊເຈົ້ານານທີ່ໃດ ອາຍຸມະຫາຣາຊເຈົ້າຈັກພລັນສັ້ນທີ່ນັ້ນ, ອີກວ່າມະຫາຣາຊເຈົ້າຍັງຮັກລູກສາວກັບທັງຕົນມະຫາຣາຊເຈົ້າດັ່ງນັ້ນ ໃຫ້

ແປງຫີບໄມ້ອັນໃຫຍ່ດີແລ້ວ ເອົາເຂົ້າຂອງເງິນຄຳແລະເສື້ອຜ້າອາພອນທຸກສິ່ງໃສ່ພໍໃຫ້ລ້ຽງຊີວິດລູກຂອງທ່ານ ຈຶ່ງເອົາລູກຂອງທ່ານໃສ່ໃນຫີບແລ້ວເອົາຫີບນັ້ນຄາດຕິດກັບແພໃຫ້ໝັ້ນ ແລ້ວໄຫຼລ່ອງນ້ຳໄປເສັຽເຖີ້ນ". ພຍາໄດ້ຍິນຄຳຊີເປືອຍດັ່ງນັ້ນ ກໍຢ້ານກົວຈຶ່ງບັງຄັບໃຫ້ມຸນຕີກະທຳຕາມຄຳຊີເປືອຍນັ້ນ ຄັນວ່າຊີເປືອຍກ່າວທີ່ນັ້ນແລ້ວ ກໍໄປທ່ຽວຊອກຈ້າງຄົນຢູ່ຮິມນ້ຳນັ້ນວ່າດັ່ງນີ້ "ເມື່ອໃດຫີບອັນໃສ່ລູກສາວພຍາໄຫຼມາເຖິງແລ້ວ ເຈົ້າຮີບເມືອບອກແກ່ຂ້ອຍແດ່ເນີ" ມັນສັ່ງຄົນຢູ່ຮິມນ້ຳໄວ້ແລ້ວກໍໜີໄປ. ມຸນຕີຜູ້ນີ້ພຍາຈຶ່ງພິຈາຣະນາຖາມຄົນຜູ້ຮູ້ລັກຂະນະດູເຂົາວ່າດັ່ງນີ້ "ນາງມີນົມສາມເຕົ້ານີ້ຈັກໄດ້ຜົວສອງຄົນ ຄືຜູ້ນຶ່ງຕາບອດ ຜູ້ນຶ່ງເປັນເປ້ຍ ຄັນນາງໄດ້ຜູ້ດອຍດັ່ງນັ້ນກໍຈັກຫາຍຈັງໄຣ ແລ້ວຈັກຈຳເຣີນສຸຂສວັສດີແກ່ຕົນ ນາງກໍບໍ່ເປັນອັນຕະຣາຍແກ່ພຍາເຈົ້າຕົນພໍ່ນັ້ນ" ຄັນວ່າມຸນຕີຮູ້ແຈ້ງດັ່ງນັ້ນແລ້ວຈຶ່ງໄຫວ້ພຍາຕົນພໍ່ໃຫ້ແປງເຮືອນຫຼັງນຶ່ງປະດັບປະດາດີແລ້ວ ກໍເອົາເຂົ້າຂອງສົມບັດທັງມວນ ເຄື່ອງນຸ່ງເຄື່ອງນອນອາພອນຊູ່ອັນ ມາໄວ້ໃນເຮືອນນັ້ນ ຈຶ່ງໃຫ້ລູກສາວພຍາຂຶ້ນເມືອຢູ່ ແລ້ວຫາຄົນຕາບອດຜູ້ນຶ່ງ ຄົນເປ້ຍຜູ້ນຶ່ງມາມອບໃຫ້ເປັນຜົວນາງມີນົມສາມເຕົ້ານັ້ນ. ມະຫາມຸນຕີຜູ້ມີປັນຍາໃຄ່ຮູ້ອັດຊາສັຍແຫ່ງຊີເປືອຍຜູ້ນັ້ນ ຈຶ່ງໃຫ້ເຂົາຫ້າງແຮ້ວ ໄດ້ເສືອໂຄ່ງຕົວນຶ່ງເອົາມາໃສ່ໃນຫີບໄມ້ຫັບໄວ້ດີແລ້ວ ກໍຄາດຕິດກັບແພໄຫຼລ່ອງນ້ຳໄປແລ້ວປ່າວເຕືອນໃຫ້ປາກົດແກ່ຄົນທັງຫຼາຍວ່າ "ໄຫຼລູກສາວພຍາເຈົ້າເສັຽແລ້ວ" ຄົນຜູ້ຮັບສິນຈ້າງເຫັນຫີບໄຫຼມາ ມັນກໍແລ່ນໄປບອກແກ່ຊີເປືອຍຜູ້ນັ້ນ ຊີເປືອຍກໍຍິນດີເພາະຢາກໄດ້ລູກສາວພຍາ ມັນຮີບໄປຢູ່ຖ້າ ກາງປ່າທີ່ໄກ

ບ່ອນຄົນບໍ່ເຫັນ. ໃນຂນະນັ້ນຫີບກໍໄຫຼມາຮອດ ມັນຈຶ່ງໄປແກ່ເອົາຫີບນັ້ນມາໄວ້ໃກ້ຝັ່ງແລ້ວ ກໍຄ່ອຍໄຂຫີບນັ້ນອອກ ເສືອໂຄ່ງຈຶ່ງຄະໂຍງອອກມາຂົບຄາບກິນຊີເປືອຍຜູ້ນັ້ນເຖິງແກ່ຄວາມຕາຍໄປ. ເຫດດັ່ງນັ້ນ ອະສຸພາຄຍະ ຈຶ່ງກ່າວໂສກອັນນີ້ວ່າ:

ກິຈການທັງຫຼາຍອັນຄົນຫາກຕິຄະນຶງ ດ້ວຍປະການສັນອື່ນ ກິຈການອັນນັ້ນ ອັນເຫດອະດາຄືກັມມະວິບາກ ຫາກກະທຳໃຫ້ປີ້ນແປ້ເສັງດ້ວຍປະການສັນອື່ນ ບໍ່ເປັນດັ່ງຄົນທັງຫຼາຍຕິຄະນຶງນັ້ນເລີຍ; ເປັນປະດຸຈດັ່ງຊີເປືອຍຜູ້ຊື່ວ່າ ສະມະນາກະນັ້ນ ອັນເປັນເຫຼື່ອເສືອໂຄ່ງຫາກນຳເອົາໄປຂ້າເສັງໃຫ້ຕາຍ ເຫດໂທດອັນກະຕິຮັກໃຄ່ຢາກໄດ້ລູກສາວພຍາມາເປັນເມັຽ.

ເມື່ອລູກສາວພຍາໄດ້ເປັນນາງສອງຜົວ ກໍຄ່ອຍປິ່ນປົວຄົນຕາບອດແລະຄົນເປັ້ຽກອດກຸມລຸກບັ້ງໄປມາດັ່ງນັ້ນ. ຍັງມີໃນວັນນຶ່ງຊາຍຜູ້ເປັນເປັ້ຽນັ້ນນັ່ງເໜືອອາສນາດີແປະຂີມຊອງ ຂນະນັ້ນຊາຍຜູ້ຕາບອດກໍຄຸບຄ່ວາມາຮອດທີ່ນັ້ນ ເລີຍພລິດທ່າວລົ້ມ ນັ້ນຈຶ່ງຈັບຈ່ອງຕີນຄົນເປັ້ຽຊັກດຶງທັງແຮງ ຕີນຄົນເປັ້ຽກໍຢຽດອອກເປັນດັ່ງຕີນຄົນທັງຫຼາຍ ຊາຍຜູ້ຕາບອດ ຂີນຕາກໍຂາດເລືອດໄຫຼຕົກເປັນອັນມາກ ເຂົາຈຶ່ງເອົາຢາມາທາຕານັ້ນກໍຫາຍ ໜ່ວຍຕານັ້ນກໍເລີຍເຫັນຮຸ່ງແຈ້ງເຫັນດີ ເປັນດັ່ງຕາຄົນທັງຫຼາຍນັ້ນ. ຍາມນັ້ນນາງມະນີເຫັນຂາເຈົ້າຕີກັນຮ້າຍແຮງດັ່ງນັ້ນ ນາງກໍຍິນຮັກແລະຮ້ອງໃຫ້ຕີອົກມືກໍຊົກນົມເຕົ້າກາງຫຼຸບເຂົ້າພາຍໃນເນື້ອໜັງ ທີ່ຍັງມີນສອງເຕົ້າຕາມປົກຕິດີ ດັ່ງນົມຄົນທັງຫຼາຍນັ້ນ.

ເທວະດາຕົນຮັກສາໂລກ ຈຶ່ງກ່າວໂສກຢູງນີ້ໄວ້ໃຫ້ລືຊາວ່າ: ນາງງາມໂສມນາດເນື້ອນິນສານເຕົ້າ ເກີດແຕ່ກຳເນີດເຄົ້າແຫ່ງຕົນ ມັນຕັ້ງນີຜິວພາບສອງຊາຍທຽມແຫບຊື່ນຊົມແລ ເປັ້ງບອດບອນກອດແຫບເນື້ອ ດູຄອນ, ອັນນຶ່ງເປັ້ງນັ້ງແຫບທົງຍົດແນບຊອງຄິດຊະຄູ່ໄວ້ ອັນໂຕທ່າວເຊລົດລົງແຫນທັບແລ ຈັບຈ່ອງຕົນເປັ້ງໄວ້ເລີຍຍືດຍາວ ເປັ້ງເຈັບຕົນປອດນັກຕີຖືກຕາລະຫາຍນີດມົວເລີຍອະສ່ວງແຈ້ງນາງ ເຫັນທຸມທອງພະນົມແຈບຈົມແລ ສານສິ່ງຈັ່ງໄຮຮ້າຍແມ່ນຫາກນ້ອຍເລີຍຫາຍ, ລາງພ່ອງຕີບໍ່ໄດ້ຍົນຄ້ອຍສັ້ນລາຍຍ່ອນກັບແປ້ເປັນອັນອື່ນເລັ້ງແລ, ບຸນນີຫາກຕາມກັນກຸມເກີດເປັນແລ ຫາຍທຸກເວນອາງໃຫ້ສ່ວາງຮ້ອນຮົນກະສັນ.

ປີສາດທັງຫຼາຍໄດ້ຍິນຄຳແຫ່ງອະທິວາທະປີສາດດັ່ງນັ້ນ ເຂົາກໍລອດບໍ່ເອົາຜູ້ໃດເປັນພຍາແກ່ເຂົາ ທີ່ຢູ່ກິນຊາກໄອສອນຝູງຕາຍ ແລ້ວກໍຕ້ານຈາຣະຈາເຊິ່ງກັນໄປມາຕາມອັນມີຢູ່ໃນປະເທດ ທີ່ເທວະດາແລະໄອສອນຍຸທກັນອົບເລອກັນນັ້ນ.

ນາງພັດຕະກາທິບໍຣະເນລອນເທພດາ ມາເຫັນໝູ່ປີສາດທັງຫຼາຍຈາຣະຈາເຊິ່ງກັນໄປມາ ນາງກໍຄຽດນາກນັກ ຈຶ່ງກ່າວດ່າເຂົາວ່າ ສູໝູ່ປີສາດຮ້າຍແຮງຄ່ວາພົງໄພດັ່ງຮື, ສູນາລະກູຕູ້ເປັນນາຍໄວ້ແລຊອນກັນເຂົ້າມາລີ້ຊົງດົງປ່າຢູ່ໃນທີ່ນີ້ເປົ່າດາຍສັນນີ້ຈາ? ປີສາດທັງຫຼາຍຂານວ່າຂ້າແຕ່ເຈົ້າກູຕູຂ້າທັງຫຼາຍມາດູເທວະດາແລະໄອສອນ ຍຸທກັນອົບເລອກັນເຫັນຊາກໄອສອນຕາຍມາກນັກຕູຂ້າທັງຫຼາຍຈຶ່ງຢູ່ກິນເລືອດກິນຍາງດາຍ, ຜີທັງຫຼາຍບອກແກ່ນາງແລ້ວ ກໍພານາງໄປເບິ່ງບ່ອນຍຸທກັນກັບເທວະດາ

ນັ້ນໃຫ້ເຫັນຊາກໄອສວນໃນຊູ່ທີ່ຊູ່ແຫ່ງໃຫ້ນາງພັດຕະກາທີເຫັນແຈ້ງຊູ່ອັນ. ແລ້ວເຂົາຈຶ່ງແຕ່ງເຄື່ອງກິຍາບູຊາພລີກັມພ້ອມຊູ່ອັນ ເອົາມາຖວາຍແກ່ນາງພັດຕະກາທີໃຫ້ສເວີຍ ແລ້ວເຂົາກໍໄຫວ້ນົບໂຄຣົບຢຳແຍງນາງແລຢູ່ເປັນບໍຣິວານແກ່ນາງນາກນັກ. ນາງພັດຕະກາທີບໍຣະເມສວນເທວະດາສເວີຍເຄື່ອງກິຍາບູຊາພລີກັມຊູ່ອັນແລ້ວ ກໍພ້ອມກັນຫຼັ້ນຊົມຊື່ນຍິນດີກັບປີສາດທັງຫຼາຍ ຫາຍຄຳກັງວົນອົນຕາຍທັງມວນ ແລ້ວຈຶ່ງເມືອສູ່ທີ່ຢູ່ແຫ່ງຕົນວັນນັ້ນແລ.

ສ່ວນຝູງປີສາດ(ຜີ) ທັງຫຼາຍກໍໜີເມືອສູ່ທີ່ຢູ່ທູກໆໝູ່ທູກໆຊູມ ວັນນັ້ນກໍມີແລ ..//..

(ບໍຣະບວນ)